# ກົນໄກການແກ້ໄຂ ຄຳຮ້ອງທຸກ ສຳລັບຊຸມຊົນ ຢູ່ໃນ ສປປ ລາວ

ທ່ານສາມາດໄປຮ້ອງທຸກໄດ້ຢູ່ໃສ ຖ້າຫາກນັກ ລົງທຶນບຸກລຸກທີ່ດິນຂອງທ່ານ, ສ້າງມົນລະພິດຕໍ່ ສິ່ງແວດລ້ອມ ຫຼື ບໍ່ປະຕິບັດຕາມ ສັນຍາທີ່ຕົກລົງກັນ?




# ປຶ້ມຄູ່ມື ສຳລັບຊຸມຊົນ ແລະ ຜູ້ທີ່ເຮັດວຽກ ກ່ຽວກັບ ການລົງທຶນ ດ້ານກະສິກຳຢ່າງມີ ຄວາມຮັບຜິດຊອບ

ກະຊວງ ແຜນການ ແລະ ການລົງທຶນ

# ສາລະບານ


1. ພາກສະເໜີ ............................................................ 6
   ຄູ່ມືສະບັບນີ້ແນະນຳທ່ານວ່າ ຄວນເຮັດແນວໃດ ຖ້າຫາກມີບັນຫາຂໍ້ຂັດແຍ່ງເກີດຂຶ້ນ ............................................................ 6
   ປຶ້ມຄູ່ມືສະບັບນີ້ ພັດທະນາຂຶ້ນມາແນວໃດ? ............................................................ 8
2. ຮ້ອງທຸກຕໍ່ ບໍລິສັດໂດຍກົງ ............................................................ 8
   ກົນໄກການແກ້ໄຂຄຳຮ້ອງທຸກ ຂອງບໍລິສັດແມ່ນຫຍັງ? ............................................................ 8
   ທ່ານສາມາດຮ້ອງທຸກຫາບໍລິສັດໂດຍກົງ ໄດ້ໃນເວລາໃດ? ............................................................ 9
   ທ່ານຈະຕິດຕໍ່ຫາຜູ້ໃດ? ............................................................ 12
   ທ່ານຈະສົ່ງຄຳຮ້ອງທຸກໄດ້ແນວໃດ? ............................................................ 12
   ຂັ້ນຕອນຕໍ່ໄປແມ່ນຫຍັງ ພາຍຫຼັງທີ່ທ່ານໄດ້ຍື່ນຄຳຮ້ອງທຸກ? ............................................................ 13
   ທ່ານສາມາດຄາດຫວັງຜົນໄດ້ຮັບ ຫຍັງແດ່? ............................................................ 15
   ທ່ານຈະມີຄວາມສ່ຽງບໍ ຈາກການນຳໃຊ້ກົນໄກການຮ້ອງທຸກຂອງບໍລິສັດ? ............................................................ 15
   ທ່ານຈະເສຍຄ່າໃຊ້ຈ່າຍຫຼາຍປານໃດ? ............................................................ 16
3. ການຍື່ນຄຳຮ້ອງທຸກ ຜ່ານກົນໄກການແກ້ໄຂຄຳຮ້ອງທຸກຂອງລັດຖະບານ ............................................................ 16
   ກົນໄກການແກ້ໄຂຄຳຮ້ອງທຸກຂອງລັດ ແມ່ນຫຍັງ? ............................................................ 16
   ທ່ານສາມາດຍື່ນຄຳຮ້ອງທຸກ ຜ່ານກົນໄກການແກ້ໄຂຄຳຮ້ອງທຸກຂອງລັດຖະບານໄດ້ໃນກໍລະນີໃດ? ............................................................ 18
   ທ່ານຈະຍື່ນຄຳຮ້ອງທຸກໄດ້ແນວໃດ? ............................................................ 18
   ຂັ້ນຕອນຕໍ່ໄປແມ່ນຫຍັງ ພາຍຫຼັງທີ່ທ່ານໄດ້ຍື່ນຄຳຮ້ອງທຸກແລ້ວ? ............................................................ 19
   ຜົນທີ່ທ່ານຈະໄດ້ຮັບ ມີຫຍັງແດ່? ............................................................ 21
   ທ່ານຈະມີຄວາມສ່ຽງບໍ ຈາກການຍື່ນຄຳຮ້ອງທຸກໄປຫາ ກົນໄກການແກ້ໄຂຄຳຮ້ອງທຸກຂອງລັດຖະບານ? ............................................................ 22
   ທ່ານຈະເສຍຄ່າໃຊ້ຈ່າຍຫຼາຍປານໃດ? ............................................................ 23
4. ການຍື່ນຄຳຮ້ອງຟ້ອງ ຕໍ່ໜ່ວຍໄກ່ເກ່ຍຂັ້ນບ້ານ ............................................................ 23
   ໜ່ວຍໄກ່ເກ່ຍຂັ້ນບ້ານ ແມ່ນຫຍັງ? ............................................................ 23
   ທ່ານສາມາດຍື່ນຄຳຮ້ອງທຸກ ຕໍ່ໜ່ວຍໄກ່ເກ່ຍຂັ້ນບ້ານ ໄດ້ໃນກໍລະນີໃດ? ............................................................ 24
   ທ່ານຈະຍື່ນຄຳຮ້ອງທຸກໄດ້ແນວໃດ? ............................................................ 25
   ຈະເກີດຫຍັງຂຶ້ນ ພາຍຫຼັງທີ່ທ່ານໄດ້ຍື່ນຄຳຮ້ອງທຸກ? ............................................................ 25
   ຜົນທີ່ທ່ານຈະໄດ້ຮັບ ມີຫຍັງໄດ້ແດ່? ............................................................ 26
   ທ່ານຈະມີຄວາມສ່ຽງບໍ ໃນການເຂົ້າໄປໄກ່ເກ່ຍຢູ່ຂັ້ນບ້ານ? ............................................................ 26
   ການໄກເກ່ຍຢູ່ຂັ້ນບ້ານ ທ່ານຈະເສຍຄ່າໃຊ້ຈ່າຍເທົ່າໃດ? ............................................................ 26
5. ສະຫຼຸບ ............................................................ 27
6. ເອກະສານອ້າງອີງ ............................................................ 27

# ອັກສອນຫຍໍ້

| | |
|---|---|
| ສພຊຂ | ສະພາປະຊາຊົນຂັ້ນແຂວງ |
| ຫຊສ | ຫ້ອງການຊັບພະຍາກອນນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ |
| BMZ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ຂອງລັດຖະບານສະຫະພັນ ເຢຍລະມັນ |
| CFS | ຄະນະກໍາມະການຄໍ້າປະກັນສະບຽງອາຫານໂລກ |
| CSO | ອົງການຈັດຕັ້ງທາງສັງຄົມ |
| EU | ສະຫະພາບເອີຣົບ |
| FPIC | ການເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ |
| GIZ | ອົງການຮ່ວມມືຂອງລັດເຢຍລະມັນ |
| NGO | ອົງການຈັດຕັ້ງ ທີ່ບໍ່ຂຶ້ນກັບລັດຖະບານ |
| RAI | ຫຼັກການ CFS ສໍາລັບ ການລົງທຶນໃນຂົງເຂດກະສິກໍາ ແລະ ລະບົບອາຫານ ທີ່ມີຄວາມຮັບຜິດຊອບ |
| RGIL | ໂຄງການ ສົ່ງເສີມການຄຸ້ມຄອງການລົງທຶນໃນຂົງເຂດທີ່ດິນ ຢ່າງມີຄວາມຮັບຜິດຊອບ |
| SDG | ເປົ້າໝາຍການພັດທະນາແບບຍືນຍົງ |

# ຄຳນຳ

ໃນຫຼາຍທົດສະວັດທີ່ຜ່ານມາ ການລົງທຶນໃນຂົງເຂດທີ່ດິນ ໄດ້ກາຍເປັນໜຶ່ງໃນຕົວຂັບເຄື່ອນຕົ້ນຕໍ ຕໍ່ການຂະຫຍາຍ ຕົວ ແລະ ການພັດທະນາຊົນນະບົດ ຂອງ ສປປ ລາວ. ເຖິງແນວໃດກໍ່ຕາມ, ກໍ່ຍັງພົບເຫັນມີຫຼາຍໆກໍລະນີ ທີ່ການລົງທຶນເຫຼົ່ານີ້ຍັງບໍ່ສອດຄ່ອງ ແລະ ບໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ ເປັນຕົ້ນແມ່ນກິດຈະກຳການລົງທຶນຍັງສົ່ງຜົນກະທົບທາງດ້ານລົບຕໍ່ສະພາບແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນ ບໍລິເວນໃກ້ຄຽງພື້ນທີ່ໂຄງການລົງທຶນ. ເຊິ່ງມັນສະທ້ອນໃຫ້ເຫັນອີກແງ່ມຸມໜຶ່ງຂອງການລົງທຶນທີ່ບໍ່ມີຄວາມຮັບຜິດຊອບ ເປັນຕົ້ນແມ່ນການຍຶດຄອງທີ່ດິນ, ການນຳໃຊ້ສານເຄມີຫຼາຍເກີນໄປ ແລະ ແຮງງານບໍ່ໄດ້ຮັບການຄຸ້ມຄອງທີ່ດີ ອັນເປັນສາເຫດສົ່ງຜົນເຮັດໃຫ້ດິນເຊື່ອມຄຸນນະພາບ ແລະ ເກີດມີຂໍ້ຂັດແຍ່ງທາງສັງຄົມ. ຂໍ້ຂັດແຍ່ງເຫຼົ່ານີ້ ສາມາດສ້າງຜົນກະທົບຕໍ່ກິດຈະກຳການລົງທຶນ ແລະ ສົ່ງຜົນກະທົບຕໍ່ຄວາມສຳເລັດຂອງການລົງທຶນນຳອີກ; ນອກຈາກນີ້, ເວລາເກີດມີຂໍ້ຂັດແຍ່ງກັບຊຸມຊົນທ້ອງຖິ່ນ ແມ່ນເຮັດໃຫ້ທຸລະກິດມີຄວາມສ່ຽງ ທັງສົ່ງຜົນກະທົບຕໍ່ຊື່ສຽງຂອງນັກລົງທຶນ.

ເພື່ອຫຼີກລ່ຽງບັນຫາດັ່ງກ່າວ, ຜູ້ລົງທຶນຕ້ອງຍຶດໝັ້ນການປະຕິບັດຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີຂອງຊຸມຊົນທ້ອງຖິ່ນຢ່າງເຂັ້ມງວດ ລວມເຖິງການປະຕິບັດຕາມມາດຕະຖານ ແລະ ຫຼັກການສາກົນ ທີ່ກ່ຽວຂ້ອງ. ເຊິ່ງໃນນີ້ແມ່ນ ລວມທັງການສ້າງໃຫ້ຊຸມຊົນທ້ອງຖິ່ນໄດ້ມີສ່ວນຮ່ວມໃນກິດຈະກຳການລົງທຶນຢ່າງເປັນລະບົບ ແລະ ມີປະສິດທິຜົນ ໂດຍສະ ເພາະແມ່ນຜູ້ທີ່ໄດ້ຮັບຜົນກະທົບຈາກການລົງທຶນ ບໍ່ວ່າຈະໃນລັກສະນະໃດກໍ່ຕາມ.

ໃນບາງກໍລະນີ, ນັກລົງທຶນໄດ້ສ້າງກົນໄກການຮ້ອງທຸກຂອງເຂົາເຈົ້າເອງ ເພື່ອແນ່ໃສ່ແກ້ໄຂບັນຫາຂໍ້ຂັດແຍ່ງທີ່ເກີດຂຶ້ນກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມດຽວກັນກໍ່ເພື່ອເປີດໂອກາດໃຫ້ຊຸມຊົນ ຫຼື ບຸກຄົນ ສາມາດສະເໜີຄວາມກັງວົງຂອງເຂົາ ເຈົ້າຕໍ່ນັກລົງທຶນໄດ້ໂດຍກົງ. ເຖິງແນວໃດກໍ່ຕາມ, ຖ້າຫາກນັກລົງທຶນໃດບໍ່ມີກົນໄກການຮ້ອງທຸກຂອງບໍລິສັດເອງ ຫຼື ມີ ແຕ່ຊຸມຊົນເຫັນວ່າການແກ້ໄຂຂໍ້ຂັດແຍ່ງ ໂດຍຜ່ານກົນໄກດັ່ງກ່າວນັ້ນ ບໍ່ຍຸຕິທຳ ຫຼື ບໍ່ຖືກຕ້ອງຕາມກົດໝາຍ, ພາກລັດຖະບານກໍ່ຍັງມີລະບົບການແກ້ໄຂຂໍ້ຂັດແຍ່ງ ແລະ ກົນໄກການຮ້ອງທຸກ ທີ່ຊຸມຊົນທ້ອງຖິ່ນ ຫຼື ບຸກຄົນ ສາມາດນຳໃຊ້ເປັນຊ່ອງທາງເພື່ອການແກ້ໄຂຄຳຮ້ອງທຸກ ຫຼື ບັນຫາຂໍ້ຂັດແຍ່ງຕ່າງໆ.

ເຖິງແມ່ນວ່າ ລັດຖະບານໄດ້ຮັບຮອງເອົາກົດໝາຍ ວ່າດ້ວຍກົນໄກແກ້ໄຂຄຳຮ້ອງທຸກ ສະບັບປັບປຸງໃນປີ 2016. ແຕ່ຍັງບໍ່ທັນມີກອບນິຕິກຳ ແລະ ຄຳແນະນຳ ສຳລັບຊຸມຊົນ ກ່ຽວກັບ ການເຂົ້າເຖິງກົນໄກການແກ້ໄຂຄຳຮ້ອງທຸກຂອງບໍລິສັດ ຫຼື ຂອງລັດ. ດັ່ງນັ້ນ, ຄູ່ມືນີ້ຈຶ່ງມີຄວາມສຳຄັນ ເພື່ອໃຫ້ຄຳແນະນຳ ແລະ ເປັນເຄື່ອງມື ສຳລັບຊຸມຊົນທ້ອງຖິ່ນ ຫຼື ບຸກຄົນທົ່ວໄປທີ່ໄດ້ຮັບຜົນກະທົບຈາກການລົງທຶນ ສາມາດສະເໜີຄວາມກັງວົນຂອງເຂົາເຈົ້າ ຫຼື ບັນຫາຂໍ້ຂັດແຍ່ງ ທີ່ເກີດມາຈາກການດຳເນີນກິດຈະກຳການລົງທຶນໃນຂົງເຂດທີ່ດິນ. ປຶ້ມຄູ່ມືສະບັບນີ້ ແມ່ນໜຶ່ງໃນ ສາມເຄື່ອງມື ສຳລັບການສ້າງຂີດຄວາມອາດສາມາດໃຫ້ແກ່ຊຸມຊົນ ກ່ຽວກັບ ການລົງທຶນດ້ານກະສິກຳຢ່າງມີຄວາມຮັບຜິດຊອບ ທີ່ພັດທະນາຂຶ້ນພາຍໃຕ້ກອບຂອງ ໂຄງການສົ່ງເສີມການຄຸ້ມຄອງການລົງທຶນໃນຂົງເຂດທີ່ດິນ ຢ່າງມີຄວາມຮັບຜິດຊອບ (RGIL) ທີ່ໄດ້ຮັບການສະໜັບສະໜູນໂດຍສະຫະພາບເອີຣົບ ແລະ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ຂອງລັດຖະບານສະຫະພັນເຢຍລະມັນ (BMZ). ຄູ່ມືເຫຼົ່ານີ້ແມ່ນເນັ້ນໃສ່ການໃຫ້ຄວາມຮູ້ ກ່ຽວກັບ ການລົງທຶນດ້ານກະສິກຳ ຢ່າງມີຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມຂອງຊຸມຊົນ ໃນການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ແລະ ການສ້າງກົນໄກແກ້ການແກ້ໄຂຄຳຮ້ອງທຸກຂອງບໍລິສັດ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ປຶ້ມຄູ່ມືສະບັບນີ້ຈະບໍ່ພຽງແຕ່ເປັນເຄື່ອງມື ຫຼື ຄຳແນະນຳທີ່ເປັນປະໂຫຍດ ສຳລັບຊຸມຊົນທ້ອງຖິ່ນ ແລະ ບຸກຄົນ ທີ່ຕ້ອງການການຊ່ວຍເຫຼືອ ໃນເວລາທີ່ເຂົາເຈົ້າມີຄວາມກັງວົນ ຫຼື ພົບພໍ້ກັບບັນຫາທີ່ເກີດຂຶ້ນ ກັບ ນັກລົງທຶນເທົ່ານັ້ນ ແຕ່ປຶ້ມຄູ່ມືນີ້ຍັງເປັນທັງເຄື່ອງມືທີ່ເປັນປະໂຫຍດສຳລັບອົງການຈັດຕັ້ງຕ່າງໆ ທີ່ເຮັດວຽກກັບຊຸມຊົນທ້ອງຖິ່ນ ກ່ຽວກັບວຽກງານການລົງທຶນດ້ານກະສິກຳຢ່າງມີຄວາມຮັບຜິດຊອບ. ຂ້າພະເຈົ້າ ຂໍຖືໂອກາດນີ້ສະແດງຄວາມຂອບໃຈ ມາຍັງພາກສ່ວນທີ່ກ່ຽວຂ້ອງຈາກພາກລັດ, ອົງການຈັດຕັ້ງທາງສັງຄົມ, ພາກສ່ວນເອກະຊົນ ແລະ ທີມງານໂຄງການ RGIL (GIZ ແລະ NIRAS) ທີ່ໄດ້ສຸມສະຕິປັນຍາ ເຂົ້າໃນການພັດທະນາປຶ້ມຄູ່ມືສຳລັບຊຸມຊົນສະບັບນີ້. ທ້າຍນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງ EU ແລະ BMZ ທີ່ໄດ້ສະໜັບສະໜູນດ້ານງົບປະມານ ເຂົ້າໃນການພັດທະນາປຶ້ມຄູ່ມືສະບັບນີ້ ຈົນສຳເລັດຢ່າງສົມບູນ.

**ລັດຖະມົນຕີ**

ຄຳເຈນ ວົງໂພສີ

# ບົດນຳ

ການເຂົ້າເຖິງທີ່ດິນ ແມ່ນມີຄວາມຈຳເປັນຫຼາຍ ສຳລັບປະຊາຊົນທີ່ອາໄສຢູ່ເຂດຊົນນະບົດ ແລະ ຕ້ອງຮັບປະກັນວ່າ ບໍ່ມີການຕັດແຍກເຂົາເຈົ້າອອກຈາກທີ່ດິນດັ່ງກ່າວ ເພາະມັນບໍ່ພຽງແຕ່ຈະເຮັດໃຫ້ ມີຄວາມສ່ຽງຕໍ່ກັບ ການຕອບສະໜອງດ້ານສະບຽງອາຫານ ແລະ ການພັດທະນາເສດຖະກິດ ຂອງເຂົາເຈົ້າ ແຕ່ຍັງຈະກະທົບຕໍ່ກັບ ຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງສັງຄົມຂອງເຂົາເຈົ້າຕື່ມອີກ. ການຮັບປະກັນສິດທິ ການເຂົ້າເຖິງທີ່ດິນ ຍັງມີຄວາມສຳຄັນຫຼາຍ ໃນການທີ່ຈະບັນລຸ ເປົ້າ ໝາຍການພັດທະນາແບບຍືນຍົງ (SDG) ທີ່ທຸກປະເທດໄດ້ຕັ້ງເປົ້າໝາຍຮ່ວມກັນ ຊຶ່ງບໍ່ສະເພາະແຕ່ ການຫຼຸດຜ່ອນຄວາມທຸກຍາກ ແລະ ການບັນລຸຄວາມໝັ້ນຄົງທາງດ້ານສະບຽງອາຫານ ແຕ່ຍັງລວມທັງຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ. ເພາະ ສະນັ້ນ, ມັນແມ່ນຄວາມຈຳເປັນອັນພື້ນຖານ ທີ່ທັງຜູ້ຊາຍ ແລະ ແມ່ຍິງ ມີສິດທິໃນການຄອບຄອງທີ່ດິນເທົ່າທຽມກັນ.

ທີ່ດິນ ມີຈຳກັດ, ການແຈກຢາຍ ແລະ ການນຳໃຊ້ທີ່ດິນ ຈຶ່ງມັກມີການຂັດແຍ້ງກັນ ລະຫວ່າງ ຜູ້ທີ່ມີສ່ວນໄດ້ສ່ວນເສຍ. ການລົງທຶນໃນຂົງເຂດທີ່ດີ ໃນຂະແໜງກະສິກຳ ແລະ ປ່າໄມ້ ເພື່ອເປົ້າໝາຍທາງການຄ້າ ອາດເຮັດໃຫ້ການຍາດແຍ່ງທີ່ດິນດັ່ງກ່າວເພີ່ມທະວີແຮງຂຶ້ນ. ການລົງທຶນດັ່ງກ່າວ ບໍ່ພຽງແຕ່ ຈະເປັນການນຳກຳໄລມາໃຫ້ແກ່ນັກລົງທຶນ, ແຕ່ມັນຍັງສົ່ງຜົນກະທົບທາງບວກຕໍ່ເສດຖະກິດໂດຍລວມ ແລະ ເຮັດໃຫ້ຊີວິດການເປັນຢູ່ ຂອງຊຸມຊົນທ້ອງຖິ່ນດີຂຶ້ນ ຜ່ານການສ້າງໂອກາດໃນການຈ້າງງານ ແລະ ການຖ່າຍທອດຄວາມຮູ້. ເຖິງແນວໃດກໍ່ຕາມ, ຖ້າຫາກວ່າການລົງທຶນບໍ່ປະຕິບັດຕາມຫຼັກການ ແລະ ຂໍ້ແນະນຳ ທີ່ໄດ້ຮັບຮອງຂອງສາກົນ ແລະ ກົດໝາຍ ແລະ ລະບຽບການ ຂອງປະເທດທີ່ນັກລົງທຶນລົງທຶນຢູ່ ຈະເຮັດໃຫ້ມີຄວາມສ່ຽງສູງທີ່ຈະສົ່ງຜົນກະທົບທາງລົບຕໍ່ຊຸມຊົນ ແລະ ສິ່ງແວດລ້ອມ. ການລົງທຶນອາດຈະພາໃຫ້ເກີດມີຂໍ້ຂັດແຍ້ງ ກ່ຽວກັບ ການນຳໃຊ້ທີ່ດິນ, ການເວນຄືນ, ການໂຍກຍ້າຍ ລວມທັງການເຊື່ອມໂຊມຂອງສິ່ງແວດລ້ອມ ພ້ອມທັງເຮັດໃຫ້ສະພາບເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ ຂອງກຸ່ມຄົນດ້ອຍໂອກາດ ຫຼຸດລົງ. ສະນັ້ນ, ເພື່ອຮັບປະກັນ ການລົງທຶນໃນຂົງເຂດທີ່ດິນ ມີຜົນກຳໄລແກ່ນັກລົງທຶນ ແລະ ຜົນປະໂຫຍດແກ່ນັກລົງທຶນນັ້ນ ຈຶ່ງເຫັນວ່າ ມີຄວາມຈຳເປັນໃນການພິຈາລະນາເຖິງອົງປະກອບຈຳນວນໜຶ່ງໃນການອອກແບບການລົງທຶນໃນຂົງເຂດທີ່ດິນ ທີ່ມີ ຄວາມຍືນຍົງ ແລະ ມີກຳໄລ.

ຕໍ່ກັບບັນຫາດັ່ງກ່າວ ໂດຍໄດ້ຮັບການສະໜັບສະໜູນຈາກ ສະຫະພາບເອີຣົບ ແລະ ກະຊວງການຮ່ວມມືເສດຖະ ກິດ ແລະ ການພັດທະນາຂອງລັດຖະບານກາງເຢຍລະມັນ ຈຶ່ງສ້າງຕັ້ງ ໂຄງການສົ່ງເສີມການຄຸ້ມຄອງບໍລິຫານ ການລົງທຶນໃນຂົງເຂດທີ່ດິນແບບມີຄວາມຮັບຜິດຊອບ (RGIL) ຂຶ້ນມາ. ໂຄງການດັ່ງກ່າວໄດ້ຈັດຕັ້ງປະຕິບັດໂດຍ GIZ ຢູ່ປະເທດ ເອທິໂອເປຍ, ລາວ ແລະ ອູການດາ ໂດຍມີຈຸດປະສົງ ເພື່ອຮັບປະກັນເຮັດໃຫ້ການລົງທຶນໃນຂົງເຂດທີ່ດິນ ມີປະສິດທິຜົນ, ປະກອບ ສ່ວນເຂົ້າໃນການຄຸ້ມຄອງທີ່ດິນແບບຍືນຍົງ ແລະ ເຄົາລົບສິດ ແລະ ຄວາມຕ້ອງການຂອງປະຊາກອນທ້ອງຖິ່ນ, ໂດຍສະເພາະ ແມ່ນກຸ່ມທີ່ມີຄວາມສ່ຽງ ແລະ ແມ່ຍິງ. ໂຄງການ RGIL ເຮັດວຽກຮ່ວມກັບ ຊຸມຊົນຢູ່ໃນພື້ນທີ່ເປົ້າໝາຍ, ຄູ່ຮ່ວມງານພາກລັດແລະນັກລົງທຶນ ລວມທັງອົງການຈັດຕັ້ງທາງສັງຄົມ, ນັກຄົ້ນຄວ້າ ແລະ ສະມາຄົມນັກທຸລະກິດ ໃນການສົ່ງເສີມການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານທີ່ດິນທີ່ດີ ໂດຍອີງໃສ່ຫຼັກການສາກົນ ເຊັ່ນ: ຫຼັກການແບບສະໝັກໃຈ ກ່ຽວກັບ ການຄຸ້ມຄອງບໍລິຫານສິດຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ ແລະ ຫຼັກການຂອງ CFS ກ່ຽວກັບ ການລົງທຶນດ້ານກະສິກຳຢ່າງມີຄວາມຮັບຜິດຊອບ (RAI).

ບັນດາຄູ່ມື ແລະ ຄູ່ມືຄຳແນະນຳ ໄດ້ຖືກພັດທະນາຂຶ້ນ ແລະ ຢັ້ງຢືນຄວາມຖືກຕ້ອງ ຜ່ານຂະບວນການປຶກສາຫາລືແບບມີສ່ວນຮ່ວມ ຫຼາຍຫຼັບຫຼາຍຕ່າວ ກັບພາກສ່ວນທີ່ກ່ຽວຂ້ອງ ພາຍຫຼັງທີ່ໄດ້ມີການປະເມີນຄວາມຕ້ອງການຕົວຈິງ ກ່ຽວກັບ ການສ້າງຂີດຄວາມສາມາດ ແລະ ວິເຄາະ ບັນດາຫຼັກການ, ລະບຽບການ ແລະ ເຄື່ອງມື ກ່ຽວກັບ ການຝຶກອົບຮົບ ຂອງສາກົນ ແລະ ຂອງປະເທດ ທີ່ມີຢູ່. ຄູ່ມືແນະນຳສະບັບນີ້ໄດ້ ຮວບຮວມອົງປະກອບທີ່ສຳຄັນຈາກ ບັນດາເຄື່ອງມື ແລະ ຫຼັກສູດການຝຶກອົບຮົມ ທີ່ມີຢູ່ແລ້ວ ແລະ ໝູນໃຊ້ໃຫ້ແທດເໝາະ ເຂົ້າໃນຂະບວນການຂອງການລົງທຶນທີ່ດິນໃນຂົງເຂດທີ່ດິນທຸກຂະໜາດໃຫຍ່ ແລະ ປະເພດ ໂດຍໃຫ້ສອດຄ່ອງກັບ ບັນຫາ ທີ່ສາມປະເທດເປົ້າໝາຍຂອງໂຄງການປະພົບພໍ້ຢູ່. ບັນດາຄູ່ມື ແລະ ຄູ່ມືຄຳແນະນຳ ແມ່ນມີເນື້ອໃນກົມກຽວກັນ ຊຶ່ງສາມາດນຳໃຊ້ຄູ່ມືໃດໜຶ່ງໄດ້ແບບເປັນເອກະລາດ ແລະ ເປັນຊຸດເຄື່ອງມືແບບຄົບຊຸດຕາມສະພາບເງື່ອນໄຂສະເພາະຂອງປະເທດ.

ປຶ້ມຄູ່ມືສະບັບນີ້ ແມ່ນເປັນສ່ວນໜຶ່ງຂອງຊຸດເຄື່ອງມືທີ່ສ້າງຂຶ້ນເພື່ອພັດທະນາຂີດຄວາມສາມາດຢູ່ ສປປ ລາວ ໂດຍສະເພາະແມ່ນນຳໃຊ້ໃນວຽກງານສົ່ງເສີມການລົງທຶນໃນຂົງເຂດທີ່ດິນຢ່າງມີຄວາມຮັບຜິດຊອບ ແລະ ໃຫ້ຂໍ້ມູນ ແລະ ຄຳແນະນຳໃນທາງປະຕິບັດໄດ້ ໃຫ້ແກ່ຊຸມຊົນ ໂດຍສະເພາະແມ່ນຂໍ້ມູນ ກ່ຽວກັບ ຂັ້ນຕອນຂະບວນການວ່າ ແມ່ນໃຜຈະເປັນຜູ້ດຳເນີນການແກ້ໄຂບັນຫາຂໍ້ຂັດແຍ່ງ ແລະ ຈະແກ້ດ້ວຍວິທີການໃດ ຖ້າຫາກການລົງທຶນກໍ່ໃຫ້ເກີດມີບັນຫາຂໍ້ຂັດແຍ່ງ. ຕົວຢ່າງ: ບັນ ຫາຂໍ້ຂັດແຍ່ງທີ່ເກີດຈາກການລົງທຶນໃນຂົງເຂດທີ່ດິນ ເຊັ່ນ: ນັກລົງທຶນບຸກລຸກດິນຂອງປະຊາຊົນ ຫຼື ສ້າງມົນລະພິດຕໍ່ສະພາບແວດລ້ອມ ລວມໄປຈົນເຖິງການບໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ. ຕໍ່ກັບບັນຫາທີ່ອາດຈະເກີດຂຶ້ນທີ່ກ່າວມານັ້ນ, ຊຸມຊົນທ້ອງຖິ່ນ ມີສິດ ຮ້ອງທຸກ ແລະ ຮຽກຮ້ອງໃຫ້ມີການແກ້ໄຂຄຳຮ້ອງທຸກ. ດັ່ງນັ້ນ, ທາງອົງການ GIZ ຫວັງວ່າ ຄູ່ມືຫົວນີ້ ຈະປະກອບສ່ວນເຂົ້າໃນການລົງທຶນຢ່າງມີຄວາມຮັບຜິດຊອບຢູ່ ສປປ ລາວ.

**ທ່ານ ນາງ Eva Prediger**

**ຫົວໜ້າໂຄງການ RGIL ປະຈຳສປປ ລາວ - GIZ**

**ໂຄງການສົ່ງເສີມການຄຸ້ມຄອງການລົງທຶນໃນຂົງເຂດທີ່ດິນ ຢ່າງມີຄວາມຮັບຜິດຊອບ (RGIL)**

# 1. ພາກສະເໜີ

*ເຊົ້າມື້ໜຶ່ງ, ນາງນ້ອຍ ໄດ້ຕື່ນຂຶ້ນເນື່ອງຈາກມີສຽງດັງລົບກວນ. ເຊິ່ງເປັນສຽງທີ່ມາຈາກປ່າ. ສຽງດັ່ງກ່າວດັງກ້ອງ ແລະ ມີສຽງແຕກ . ດ້ວຍຄວາມຢ້ານ, ນາງນ້ອຍໄດ້ຫຼຽວເບິ່ງອອກໄປຂ້າງນອກຕູບ. ສຽງດັງຂຶ້ນເລື່ອຍໆ, ນາງນ້ອຍໄດ້ແລ່ນໄປຫາແມ່ຂອງລາວ ແລະ ປຸກແມ່ລາວໃຫ້ຕື່ນ. ລັດຕະນາ ຜູ້ເປັນແມ່ໄດ້ສະດຸ້ງຕື່ນຂຶ້ນ ແລະ ຮູ້ທັນທີວ່າ: ນີ້ແມ່ນສຽງຂອງລົດດູດ. ນາງໄດ້ປຸກຜົວຂອງນາງຢ່າງໄວວາ ພວກເຂົາທັງສອງໄດ້ນຸ່ງເຄື່ອງໃສ່ ແລະ ແລ່ນອອກໄປເດີ່ນກາງບ້ານ. ໃນເວລາດຽວກັນກໍ່ມີຜູ້ໃຫຍ່ອີກຫຼາຍຄົນ ກໍພາກັນຟ້າວແລ່ນໄປທີ່ນັ້ນຄືກັນ. ພວກເຂົາກຳລັງລໍຖ້ານາຍບ້ານຢູ່. ທັນທີນາຍບ້ານມາຮອດ ພວກເຂົາໄດ້ຫຸ້ມຖາມ ຖາມນາຍບ້ານວ່າ: ພວກເຂົາກຳລັງເຮັດຫຍັງຢູ່ທີ່ນັ້ນ? ພວກເຮົາສາມາດຢຸດພວກເຂົາໄດ້ແນວໃດ? ພວກເຮົາຈະສາມາດບອກເຂົາອອກໄປໄດ້ແນວໃດ?*




*ຮູບສະແດງ 1: ຊຸມຊົນທ້ອງຖິ່ນກຳລັງຮ້ອງທຸກ ຕໍ່ນາຍບ້ານ ກ່ຽວກັບ ນັກລົງທຶນບຸກລຸກທີ່ດິນຂອງເຂົາເຈົ້າ*

ມັນເກີດຫຍັງຂຶ້ນຢູ່ທີ່ນີ້? ປາກົດວ່າ, ນັກລົງທຶນໄດ້ລິເລີ່ມໂຄງການລົງທຶນໃໝ່ ໂດຍທີ່ຊາວບ້ານບໍ່ຮັບຮູ້ ຫຼື ບໍ່ໄດ້ຕົກລົງເຫັນດີຫຍັງກັບເຂົາເຈົ້າມາກ່ອນ. ສະນັ້ນ, ສິ່ງດັ່ງກ່າວຈະບໍ່ເກີດຂຶ້ນຖ້າຫາກວ່າ ນັກລົງທຶນໄດ້ມີສ່ວນຮ່ວມກັບຊຸມຊົນທ້ອງຖິ່ນໃນການວາງແຜນ ແລະ ອອກແບບໂຄງການ ເພື່ອໃຫ້ມັນສອດຄ່ອງກັບຄວາມຕ້ອງການຂອງເຂົາເຈົ້າແຕ່ຕົ້ນ. ເຊິ່ງສິ່ງເຫຼົ່ານີ້ແມ່ນເປັນສິ່ງທີ່ນັກລົງທຶນຄວນເຮັດແຕ່ຕົ້ນ ແລະ ລໍຖ້າຈົນກວ່າຈະໄດ້ຮັບການເຫັນດີເຫັນພ້ອມຈາກຊຸມຊົນກ່ອນຈຶ່ງເລີ່ມການບຸກ ເບີກທີ່ດິນ. ຊຸມຊົນທ້ອງຖິ່ນມີສິດທີ່ຈະເຂົ້າຮ່ວມຂະບວນການປຶກສາຫາລື ເພື່ອການເຫັນດີເຫັນພ້ອມ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC). ກິດຈະກຳການລົງທຶນ ຄວນຖືກໂຈະໄວ້ກ່ອນ ຖ້າຫາກຂະບວນການດັ່ງກ່າວນີ້ບໍ່ໄດ້ດຳເນີນໄປຢ່າງຄົບຖ້ວນ ແລະ ພຽງພໍ ຫຼື ນັກລົງທຶນບໍ່ສົນ ກ່ຽວກັບ ການປະຕິເສດຂອງຊຸມຊົນທ້ອງຖິ່ນ. ມາຮອດຂັ້ນຕອນນີ້ ປະຊາຊົນທ້ອງ ຖິ່ນຄວນຈະຕ້ອງຖາມຕົວເຂົາເຈົ້າເອງວ່າ ເຂົາເຈົ້າສາມາດເຮັດຫຍັງໄດ້ແດ່?. ແມ່ນໃຜທີ່ເຂົາເຈົ້າສາມາດຮ້ອງທຸກຕໍ່ ແລະ ດ້ວຍຮູບແບບໃດ? ນີ້ແມ່ນເປົ້າໝາຍທີ່ປຶ້ມຄູ່ມືສະບັບນີ້ຈະໄດ້ເວົ້າເຖິງ.

## ຄູ່ມືສະບັບນີ້ແນະນຳທ່ານວ່າ ຄວນເຮັດແນວໃດ ຖ້າຫາກມີບັນຫາຂໍ້ຂັດແຍ່ງເກີດຂຶ້ນ

ຖ້າຫາກນັກລົງທຶນສ້າງຜົນກະທົບຕໍ່ທ່ານ ຫຼື ສະພາບແວດລ້ອມຂອງທ່ານ ທີ່ເປັນເຫດມາຈາກກິດຈະກຳການລົງທຶນຂອງນັກລົງທຶນ, ທ່ານມີສິດທີ່ຈະຮ້ອງທຸກໄດ້.

### ລັດຖະທຳມະນູນ ແຫ່ງ ສປປ ລາວ ມາດຕາ 41:

ພົນລະເມືອງລາວທຸກຄົນມີສິດຮ້ອງທຸກ ແລະ ຮ້ອງຟ້ອງ ແລະ ສະເໜີຄວາມຄິດເຫັນຕໍ່ອົງການຈັດຕັ້ງຂອງລັດ ກ່ຽວກັບບັນຫາທີ່ກ່ຽວຂ້ອງເຖິງຜົນປະໂຫຍດຂອງສັງຄົມ ຫຼື ສິດ ແລະ ຜົນປະໂຫຍດຂອງປະຊາຊົນ .

ທ່ານມີຫຼາຍທາງເລືອກທີ່ສາມາດຮ້ອງທຸກໄດ້ ເຊັ່ນ: ທ່ານສາມາດຮ້ອງທຸກໂດຍກົງຫາບໍລິສັດ, ທ່ານສາມາດຮ້ອງທຸກຕໍ່ອຳນາດການປົກຄອງຂອງລັດທີ່ກ່ຽວຂ້ອງ. ໃນກໍລະນີເກີດມີຂໍ້ຂັດແຍ່ງກັບ ໂຄງການລົງທຶນຂະໜາດນ້ອຍ ແລະ/ຫຼື ບໍລິສັດຂະໜາດນ້ອຍທີ່ເປັນຄົນລາວ ທີ່ມີຜົນກະທົບໜ້ອຍ ແລະ ບໍ່ຮຸນແຮງ ທ່ານສາມາດສະເໜີ ຫາໜ່ວຍໄກ່ເກ່ຍຂັ້ນບ້ານ ເພື່ອແກ້ໄຂ

. ແຕ່ຖ້າຫາກທ່ານຍັງບໍ່ພໍໃຈກັບຜົນຮັບຂອງການແກ້ໄຂ, ທ່ານສາມາດຍື່ນຄຳຮ້ອງທຸກຕໍ່ສານ. ຖ້າຫາກຍັງບໍ່ໄດ້ຮັບການແກ້ໄຂໄດ້, ສຸດທ້າຍທ່ານກໍ່ສາມາດຍື່ນຄຳຮ້ອງທຸກຕໍ່ສະພາ.

ປື້ມຄູ່ມືສະບັບນີ້, ໄດ້ອະທິບາຍເຖິງ ລາຍລະອຽດເພີ່ມເຕີມວ່າ ທ່ານຕ້ອງປະສານຫາໃຜ ແລະ ດ້ວຍວິທີການໃດ ເພື່ອໃຫ້ຄຳສະເໜີ ຫຼື ບັນຫາຂອງທ່ານ ຖືກຮັບຮູ້ຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຮັບປະກັນວ່າທ່ານຈະໄດ້ຮັບການຊ່ວຍ ເຫຼືອໃນການແກ້ໄຂບັນຫາ.




ສານປະຊາຊົນ : ຫາກທ່ານເຫັນວ່າຜົນຂອງການແກ້ໄຂ ຜ່ານກົນໄກບໍລິຫານ ບໍ່ຖືກຕ້ອງຕາມກົດໝາຍ ຫຼື ທ່ານບໍ່ພໍໃຈກັບຜົນຂອງການແກ້ໄຂ, ທ່ານສາມາດຍື່ນຄຳຮ້ອງທຸກໂດຍກົງຕໍ່ ສານປະຊາຊົນໄດ້. ໃນກໍລະນີຄະດີທີ່ມີມູນຄ່າຕໍ່າກວ່າ 300.000.000 ກີບ ທ່ານຕ້ອງຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນເຂດ. ສຳລັບຄະດີອື່ນແມ່ນ ຍື່ນຕໍ່ສານນະຄອນຫຼວງວຽງຈັນ ຫຼື ສານປະຊາຊົນຂັ້ນແຂວງ ເປັນຜູ້ຮັບຜິດຊອບ.

ສະພາປະຊາຊົນ/ສະພາແຫ່ງຊາດ: ຮ້ອງທຸກເພື່ອໃຫ້ມີການສືບສວນສອບສວນ ການຕັດສິນຂອງອົງການປົກຄອງ ແລະ ຄຳຕັດສິນຂອງສານປະຊາຊົນ ແມ່ນສາມາດເລືອກທີ່ຈະຍື່ນຄຳຮ້ອງທຸກ ຕໍ່ສະພາປະຊາຊົນແຂວງ ຫຼື ສະພາແຫ່ງຊາດ ຖ້າຫາກທ່ານເຫັນວ່າຜົນຂອງການແກ້ໄຂ ທາງດ້ານບໍລິຫານ ແລະ ຕຸລາການ ບໍ່ສອດຄ່ອງກັບກົດໝາຍ ຫຼື ທ່ານບໍ່ພໍໃຈກັບຜົນຂອງການແກ້ໄຂ.

*ຮູບສະແດງ 2: ຊ່ອງທາງຫຼັກ ໃນການຮ້ອງທຸກ ແລະ ຮຽກຮ້ອງການແກ້ໄຂບັນຫາ*

## ປື້ມຄູ່ມືສະບັບນີ້ ພັດທະນາຂຶ້ນມາແນວໃດ?

ການພັດທະນາປຶ້ມຄູ່ມືສະບັບນີ້ ແມ່ນເປັນສ່ວນໜຶ່ງຂອງກິດຈະກຳການສ້າງຄວາມອາດສາມາດ ຂອງກອບການຮ່ວມມື ລາວ-ເຢຍລະມັນ ພາຍໃຕ້ໂຄງການ ສົ່ງເສີມການຄຸ້ມຄອງການລົງທຶນໃນຂົງເຂດທີ່ດິນ ຢ່າງມີຄວາມຮັບຜິດຊອບ (RGIL) ໂດຍໄດ້ຮັບທຶນສະໜັບສະໜູນຈາກ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ຂອງລັດຖະບານສະຫະພັນເຢຍລະມັນ (BMZ) ແລະ ສະຫະພາບເອີຣົບ (EU). ຈຸດປະສົງຂອງໂຄງການແມ່ນເພື່ອ "ສົ່ງເສີມການລົງທຶນໃນຂົງເຂດທີ່ດິນໃຫ້ມີປະສິດທິຜົນ, ປະກອບສ່ວນເຂົ້າໃນການຄຸ້ມຄອງທີ່ດິນແບບຍືນຍົງ ແລະ ເຄົາລົບສິດ ແລະ ຄວາມຕ້ອງການຂອງປະຊາຊົນທ້ອງຖິ່ນ ໂດຍສະເພາະກຸ່ມທີ່ມີຄວາມສ່ຽງ ແລະ ແມ່ຍິງ."

ເພື່ອຮັບປະກັນໃຫ້ເນື້ອໃນ ແລະ ຮູບແບບຂອງຄູ່ມືສະບັບນີ້ ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງພາກສ່ວນທີ່ກ່ຽວຂ້ອງພາກລັດ, ພາກເອກະຊົນ ແລະ ສັງຄົມ. ສະນັ້ນ, ການພັດທະນາຈຶ່ງໄດ້ມີການປຶກສາຫາລືກັບບັນດາພາກສ່ວນກ່ຽວຂ້ອງດັ່ງກ່າວ ໂດຍຜ່ານກອງປະຊຸມປຶກສາຫາລືຫຼາຍໆຄັ້ງ.

# 2. ຮ້ອງທຸກຕໍ່ ບໍລິສັດໂດຍກົງ

ຖ້ານັກລົງທຶນຫາກສ້າງຜົນກະທົບທາງດ້ານລົບ ຕໍ່ຜົນປະໂຫຍດ ແລະ ສິດທິພື້ນຖານຂອງທ່ານ, ທ່ານສາມາດຮ້ອງ ທຸກໂດຍກົງຕໍ່ນັກລົງທຶນ. ພາກສ່ວນນັກລົງທຶນແມ່ນມີຄວາມຈຳເປັນຕ້ອງໄດ້ສະໜອງກົນໄກການຮ້ອງທຸກ ເພື່ອແກ້ໄຂບັນດາຂໍ້ຂັດແຍ່ງດັ່ງກ່າວ.

ກົດໝາຍ ສປປລາວ ຊຸກຍູ້ສົ່ງເສີມການສ້າງກົນໄກການຮ້ອງທຸກຂອງບໍລິສັດ. ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ດຳລັດວ່າດ້ວຍການຊົດເຊີຍ ລະບຸວ່າ: ຜູ້ພັດທະນາໂຄງການ (ບໍລິສັດຕ່າງໆ ມີພັນທະໃນການຮັບ ແລະ ແກ້ໄຂຄຳຮ້ອງທຸກຈາກຊຸມຊົນທີ່ຖືກຜົນກະທົບ (ມາດຕາ 74 ຂອງດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, 2022 ຂອງນາຍົກລັດຖະມົນຕີ). ນອກຈາກນີ້, ບັນດາໂຄງການຮ່ວມມືພາກລັດ - ເອກະຊົນ, ນັກລົງທຶນມີສິດ ແລະ ຄວາມຮັບຜິດຊອບໃນການສ້າງກົນໄກການຮ້ອງທຸກ ຂອງບໍລິສັດ ໃນຮູບແບບທີ່ງ່າຍດາຍ ແລະ ມີປະສິດທິຜົນ (ມາດຕາ 42 ຂອງດຳລັດນາຍົກລັດຖະມົນຕີ, 2021).
ກົດໝາຍ ສປປລາວ ຊຸກຍູ້ສົ່ງເສີມການສ້າງກົນໄກການຮ້ອງທຸກຂອງບໍລິສັດ. ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ດຳລັດວ່າດ້ວຍການຊົດເຊີຍ ລະບຸວ່າ: ຜູ້ພັດທະນາໂຄງການ (ບໍລິສັດຕ່າງໆ ມີພັນທະໃນການຮັບ ແລະ ແກ້ໄຂຄຳຮ້ອງທຸກຈາກຊຸມຊົນທີ່ຖືກຜົນກະທົບ (ມາດຕາ 74 ຂອງດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, 2022 ຂອງນາຍົກລັດຖະມົນຕີ). ນອກຈາກນີ້, ບັນດາໂຄງການຮ່ວມມືພາກລັດ - ເອກະຊົນ, ນັກລົງທຶນມີສິດ ແລະ ຄວາມຮັບຜິດຊອບໃນການສ້າງກົນໄກການຮ້ອງທຸກ ຂອງບໍລິສັດ ໃນຮູບແບບທີ່ງ່າຍດາຍ ແລະ ມີປະສິດທິຜົນ (ມາດຕາ 42 ຂອງດຳລັດນາຍົກລັດຖະມົນຕີ, 2021).

## ກົນໄກການແກ້ໄຂຄຳຮ້ອງທຸກ ຂອງບໍລິສັດແມ່ນຫຍັງ?

ກົນໄກການຮ້ອງທຸກ ຂອງບໍລິສັດແມ່ນເຮັດວຽກຄ້າຍຄືກັນກັບໄປສະນີ ຫຼື ໜ່ວຍງານ ທີ່ບໍລິສັດຕັ້ງຂຶ້ນ ເພື່ອແກ້ໄຂ ຄຳຮ້ອງທຸກ ຫຼື ຂໍ້ຂັດແຍ່ງທີ່ເກີດຂຶ້ນ ລະຫວ່າງ ນາຍຈ້າງ ແລະ ພະນັກງານພາຍໃນບໍລິສັດ ຫຼື ລະຫວ່າງ ບໍລິສັດ ກັບບ້ານອ້ອມຂ້າງ. ໃນກໍລະນີບໍລິສັດຂະໜາດໃຫຍ່ ສາມາດສ້າງຕັ້ງເປັນຫ້ອງການ ແກ້ໄຂຄຳຮ້ອງທຸກ ຫຼື ຖ້າແມ່ນບໍລິສັດຂະໜາດນ້ອຍ ສາມາດສ້າງເປັນຈຸດປະສານງານ ໃນການໄກ່ເກ່ຍຂໍ້ຂັດແຍ່ງ ຫຼື ຜູ້ຕິດຕໍ່ປະສານງານຊຸມຊົນ.

ກົນໄກການຮ້ອງທຸກຈະເຮັດໜ້າທີ່ ເປັນບ່ອນໃຫ້ປະຊາຊົນສາມາດສະເໜີຄຳຮ້ອງທຸກ ກ່ຽວກັບ ຜົນກະທົບທາງລົບທີ່ເກີດຈາກກິດຈະກຳຂອງບໍລິສັດ ໂດຍສະເພາະແມ່ນຜົນກະທົບທີ່ກຳລັງເກີດຂຶ້ນຢູ່ ຫຼື ຄວາມກັງວົນ ຕໍ່ກັບຜົນກະທົບ ຫຼື ຄວາມເສຍຫາຍທີ່ກຳລັງຈະເກີດຂຶ້ນ. ກົນໄກເຫຼົ່ານີ້ ຈະສາມາດເຮັດໃຫ້ບັນຫາໄດ້ຮັບການແກ້ໄຂແຕ່ຫົວທີ ເພື່ອບໍ່ໃຫ້ເກີດຄວາມເສຍຫາຍທີ່ຮຸນແຮງຂຶ້ນ. ຜົນກະທົບທາງລົບ ອາດຈະໄດ້ຮັບການແກ້ໄຂໄດ້ໂດຍໄວ ຫຼື ສາມາດປ້ອງກັນບໍ່ໃຫ້ເກີດຂຶ້ນໄດ້. ດັ່ງນັ້ນ, ປະໂຫຍດຂອງກົນໄກການແກ້ໄຂຄຳຮ້ອງທຸກເຫຼົ່ານີ້ ແມ່ນບໍ່ພຽງແຕ່ຈະສາມາດແກ້ໄຂຜົນກະທົບທາງລົບທີ່ເກີດຂຶ້ນເທົ່ານັ້ນ ແຕ່ມັນຍັງສາມາດປ້ອງກັນບໍ່ໃຫ້ເກີດຄວາມເສຍຫາຍ (ເພີ່ມຂຶ້ນ) ນຳອີກ. ມາຮອດປະຈຸບັນ ຍັງມີຫຼາຍບໍລິສັດທີ່ບໍ່ມີກົນໄກການຮ້ອງທຸກ

ຂອງຕົນເອງ. ເນື່ອງຈາກວ່າມັນຍັງເປັນຂໍ້ກຳນົດໃໝ່ ສຳລັບບໍລິສັດ ທີ່ຈະປະຕິບັດຕາມມາດຕະການປະ ຕິບັດ ຂອງສາກົນ, ມີພຽງແຕ່ບໍລິສັດຈຳນວນໜ້ອຍໜຶ່ງເທົ່ານັ້ນ ທີ່ໄດ້ສ້າງຕັ້ງກົນໄກການຮ້ອງທຸກເປັນຂອງບໍລິສັດເອງ ແລະ ກົນໄກທີ່ໄດ້ຮັບການສ້າງຕັ້ງຂຶ້ນດັ່ງກ່າວ ກໍ່ຍັງບໍ່ທັນປະຕິບັດຕາມມາດຕະຖານສາກົນໄດ້ 100% ເທື່ອ.

## ທ່ານສາມາດຮ້ອງທຸກຫາບໍລິສັດໂດຍກົງ ໄດ້ໃນເວລາໃດ?

ບໍລິສັດມີຄວາມຈຳເປັນຈະຕ້ອງຈັດການກັບຄຳຮ້ອງທຸກຂອງບໍລິສັດເອງ ຖ້າການຮ້ອງທຸກດັ່ງກ່າວ ອາດຈະສ້າງຜົນກະທົບທາງດ້ານຕໍ່ຜົນປະໂຫຍດຂອງບໍລິສັດ ແລະ ລະເມີດສິດທິພື້ນຖານຂອງຊຸມຊົນຊົນ, ເຖິງແນວໃດກໍ່ຕາມ, ຊາວບ້ານບໍ່ຈຳເປັນຕ້ອງລໍຖ້າໃຫ້ນັກລົງທຶນ ລະເມີດສິດທິຂອງທ່ານກ່ອນຈະຍື່ນຄຳຮ້ອງທຸກ ແຕ່ຄວນຍື່ນຄຳຮ້ອງທຸກຕໍ່ນັກລົງທຶນເລີຍ ຖ້າຫາກທ່ານມີຄວາມກັງວົນ ກ່ຽວກັບ ການຈັດຕັ້ງປະຕິບັດຂອງໂຄງການລົງທຶນ. ຖ້າເປັນແນວນັ້ນ ມັນກໍ່ມີເຫດຜົນພຽງພໍ ທີ່ທ່ານບໍ່ຈຳເປັນຕ້ອງລໍຖ້າຈົນກວ່າໃຫ້ບັນຫາມັນເກີດຂຶ້ນ ຈົນກາຍເປັນຂໍ້ຂັດແຍ່ງ ແລະ ເກີດມີການຮ້ອງທຸກຕ່າງໆ ຕາມມາ.

ນີ້ແມ່ນບາງຕົວຢ່າງຂອງການເກີດຜົນກະທົບທາງດ້ານລົບຕໍ່ຜົນປະໂຫຍດ ແລະ ລະເມີດສິດທິພື້ນຖານທາງສັງຄົມ ຫຼື ກຳລັງຈະຖືກລະເມີດ:

- ທີ່ດິນ ທີ່ເປັນບ່ອນທຳການຜະລິດສະບຽງອາຫານຂອງທ່ານ ຖືກນັກລົງທຶນບຸກເບີກສຳລັບການລົງທຶນ (ເຮັດໃຫ້ມີການລະເມີດສິດທິໃນເຂົ້າເຖິງສະບຽງອາຫານຂອງທ່ານ),




*ຮູບສະແດງ 3: ນັກລົງທຶນບຸກເບີກພື້ນທີ່ດິນນາ ເຮັດໃຫ້ສົ່ງຜົນກະທົບທາງດ້ານລົບຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານຂອງທ້ອງຖິ່ນ*

- ນັກລົງທຶນຈັບຈອງເອົາພື້ນທີ່ດິນເປັນບໍລິເວນກວ້າງ ທີ່ປະຊາຊົນບໍ່ໄດ້ນຳໃຊ້ເຂົ້າໃນການຜະລິດ, ແຕ່ວ່າມັນເປັນພື້ນທີ່ແຫຼ່ງນ້ຳຂອງທ່ານ - ເປັນແຫຼ່ງສະໜອງນ້ຳດື່ມ, ນ້ຳໃຊ້ ຫຼື ເປັນເຂດຫາປາ ຂອງທ່ານ (ສະແດງເຖິງການລະເມີດສິດໃນເຂົ້າເຖິງ ແຫຼ່ງນ້ຳ, ອາຫານ ແລະ ສິດດ້ານສຸຂະພາບ ຂອງທ່ານ),




*ຮູບສະແດງ 4: ນັກລົງທຶນໄດ້ບຸກເບີກທີ່ດິນຊຸມຊົນ ທີ່ປະຊາຊົນນໍາໃຊ້ເປັນແຫຼ່ງນໍ້າ ເພື່ອບໍລິໂພກ ແລະ ຫາປາ*

- ນັກລົງທຶນຈັບຈອງເອົາພື້ນທີ່ ທີ່ປະຊາຊົນນໍາໃຊ້ ດັ່ງທີ່ສະແດງຢູ່ຮູບພາບ ເຫັນເຮືອນບາງສ່ວນ ຫຼື ຫຼາຍຫຼັງຖືກທໍາລາຍ ໂດຍທີ່ທ່ານບໍ່ໄດ້ຮັບຄ່າຊົດເຊີຍ ແລະ ທ່ານບໍ່ໄດ້ເຫັນດີອະນຸມັດ (ສະແດງເຖິງການລະເມີດສິດທິຂອງທ່ານ ດ້ານການມີທີ່ພັກອາໄສທີ່ເໝາະສົມ ແລະ ລະເມີດຂໍ້ຫ້າມ ການຖືກຂັບໄລ່ໂດຍບັງຄັບ),



*ຮູບສະແດງ 5: ນັກລົງທຶນບຸກເບີກພື້ນທີ່ ທີ່ຢູ່ອາໄສ ທີ່ມີລັກສະນະບັງຄັບໃຫ້ຊຸມຊົນທ້ອງຖິ່ນ ປະຖິ້ມເຮືອນຂອງເຂົາເຈົ້າ*

- ອີງໃສ່ການຮັບຮູ້ຂອງທ່ານ ກ່ຽວກັບ ໂຄງການລົງທຶນ, ທ່ານຄິດວ່າ ການລົງທຶນໃດໜຶ່ງ ຈະສົ່ງຜົນກະທົບທາງດ້ານລົບຕໍ່ສິ່ງແວດລ້ອມ ແລະ ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ ເຊັ່ນ: ເປັນມົນລະພິດຕໍ່ນ້ຳດື່ມ, ການປົນເປື້ອນຂອງດິນ (ທີ່ນຳໃຊ້ສຳລັບການຜະລິດກະສິກຳ, ລ້ຽງສັດ ຫຼື ປ່າໄມ້), ມົນລະພິດທາງອາກາດ, ລັງສີ ແລະ ອື່ນໆ (ສະແດງເຖິງການລະເມີດສິດທິຂອງທ່ານ ໃນດ້ານມາດຕະຖານການຮັກສາສຸຂະພາບ),



*ຮູບສະແດງ 6: ຊຸມຊົນທ້ອງຖິ່ນມີຄວາມກັງວົນ ກ່ຽວກັບ ຜົນກະທົບທາງດ້ານລົບຈາກການລົງທຶນໃນຂົງເຂດທີ່ດິນທີ່ມີຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງຄົນ*

- ປະຊາຊົນໄດ້ເຕົ້າໂຮມກັນ ເພື່ອຮຽກຮ້ອງໃຫ້ບໍລິສັດຮັບຮູ້ບັນຫາ ແລະ ຫາທາງອອກໂດຍສັນຕິວິທີ. ໃນຂະນະທີ່ເຂົ້າໄປຫາບໍລິສັດ, ນັກລົງທຶນໄດ້ພະຍາຍາມ ກີດກັ້ນເພື່ອບໍ່ໃຫ້ຊຸມຊົນເຂົ້າມາ (ນີ້ສະແດງໃຫ້ເຫັນເຖິງການລະເມີດສິດເສລີພາບໃນການສະແດງອອກ ແລະ ສິດໃນການຊຸມນຸມໂດຍສັນຕິວິທີ).




*ຮູບສະແດງ 7: ຕົວແທນຂອງບໍລິສັດ ສະກັດກັ້ນບໍ່ໃຫ້ສະມາຊິກຊຸມຊົນທ້ອງຖິ່ນ ຂັດຂວາງການບຸກເບີກທີ່ດິນ ຢູ່ພື້ນທີ່ສຳປະທານ*

## ທ່ານຈະຕິດຕໍ່ຫາຜູ້ໃດ?

ບໍລິສັດອາດມີກົນໄກການຮ້ອງທຸກຂອງຕົນເອງ ຫຼື ນຳໃຊ້ກົນໄກການຮ້ອງທຸກຮ່ວມກັບບໍລິສັດອື່ນ. ເຊິ່ງມັນບໍ່ມີຄວາມແຕກຕ່າງ ສຳລັບທ່ານ. ທ່ານພຽງແຕ່ຕ້ອງການຊອກຫາຜູ້ທີ່ຈະຕິດຕໍ່ພົວພັນ. ທ່ານສາມາດຕິດຕໍ່ຫາຫ້ອງການແຜນການ ແລະ ການລົງທຶນ ເມືອງ, ພະແນກແຜນການ ແລະ ການລົງທຶນແຂວງ, ສະພາການຄ້າ ແລະ ອຸດສາຫະກຳ ຫຼື ພະນັກງານຂອງບໍລິສັດ ກໍ່ໄດ້. ຖ້າ ທ່ານສາມາດເຂົ້າເຖິງອິນເຕີເນັດໄດ້, ຂໍ້ມູນການຕິດຕໍ່ພົວພັນນີ້ແມ່ນສາມາດຄົ້ນຫາໄດ້ຢູ່ໃນເວັບໄຊທ໌ຂອງບໍລິສັດ. ນອກຈາກນີ້ ທ່ານຍັງສາມາດຊອກຫາເບີໂທລະສັບຕິດຕໍ່ ຫຼື ອີເມວ ໄດ້ຢູ່ຕາມປ້າຍບໍລິສັດທີ່ມີຢູ່ໃນພື້ນທີ່ການລົງທຶນ.

## ທ່ານຈະສົ່ງຄຳຮ້ອງທຸກໄດ້ແນວໃດ?

ໂດຍຫຼັກການແລ້ວ, ທ່ານສາມາດຍື່ນຄຳຮ້ອງທຸກຂອງທ່ານ ໃນຮູບແບບທີ່ບໍ່ເປັນທາງການໄດ້ທຸກເວລາ ແລະ ສາມາດນຳໃຊ້ ພາສາຂອງທ່ານ ໂດຍສະເໜີຜ່ານຊ່ອງທາງຕ່າງໆ (ເຊັ່ນ: ທາງໂທລະສັບ, ອີເມວ, ໄປສະນີ ຫຼື ການຍື່ນໂດຍກົງ). ເຖິງແນວ ໃດກໍ່ຕາມ, ບາງບໍລິສັດອາດຈະມີຂັ້ນຕອນການຮ້ອງທຸກຂອງພວກເຂົາຢູ່ແລ້ວ ແລະ ພວກທ່ານອາດຈະຕ້ອງໄດ້ຕື່ມຂໍ້ມູນໃສ່ ແບບຟອມການຮ້ອງທຸກ ທີ່ເພິ່ນກຳນົດໃຫ້. ຖ້າຫາກທ່ານມີຂໍ້ສົງໄສ ກ່ຽວກັບ ວິທີການຮ້ອງທຸກ ທ່ານສາມາດຕິດຕໍ່ຫາບໍລິສັດ ເພື່ອສອບຖາມລາຍລະອຽດນຳເຂົາເຈົ້າເລີຍ; ຫຼື ໃນກໍລະນີທີ່ທ່ານບໍ່ຢາກເປີດເຜີຍຕົວຕົນຂອງທ່ານ ທ່ານກໍ່ສາມາດຂໍຄວາມ ຊ່ວຍເຫຼືອຈາກພາກສ່ວນທີ່ກ່ຽວຂ້ອງອື່ນໆ ເຊັ່ນ: ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO) ຫຼື ອົງການຈັດຕັ້ງທາງ ສັງຄົມ (CSO) ເພື່ອດຳເນີນການຮ້ອງທຸກຊ່ວຍທ່ານ. ສິ່ງທີ່ສຳຄັນທີ່ສຸດແມ່ນ ຄວນໄດ້ຮັບເອກະສານເປັນລາຍລັກອັກສອນ ກ່ຽວກັບຂັ້ນຕອນການຮ້ອງທຸກທັງໝົດ ນຳບໍລິສັດທີ່ທ່ານຮ້ອງທຸກ ທີ່ລະບຸຂໍ້ມູນລາຍລະອຽດ ກ່ຽວກັບ ວ່າທ່ານຕ້ອງເຮັດຫຍັງ ແດ່, ວິທີການໃດ ແລະ ເວລາໃດ.




*ຮູບສະແດງ 8: ຊຸມຊົນທ້ອງຖິ່ນສາມາດສົ່ງຄຳຮ້ອງທຸກຂອງເຂົາເຈົ້າຫານັກລົງທຶນ ໂດຍຜ່ານຊ່ອງທາງຕ່າງໆ ເຊັ່ນ: ການລາຍງານດ້ວຍປາກເປົ່າ, ການສື່ສານທາງໂທລະສັບ ຫຼື ຂຽນຕື່ມຕາມແບບຟອມເປັນລາຍລັກອັກສອນ ແລ້ວສົ່ງຜ່ານທາງໄປສະນີ ຫຼື ອີເມວ*

ໂດຍປົກກະຕິແລ້ວ ຄຳຮ້ອງທຸກຂອງທ່ານຈະປະກອບດ້ວຍຂໍ້ມູນ ດັ່ງລຸ່ມນີ້:

- ແມ່ນຫຍັງເກີດຂຶ້ນ?
- ມັນເກີດຂຶ້ນຢູ່ໃສ?

- ແມ່ນໃຜແດ່ ທີ່ໄດ້ຮັບຜົນກະທົບ?
- ຄວາມເສຍຫາຍເປັນແນວໃດ?
- ບໍລິສັດ ມີຄວາມກ່ຽວຂ້ອງກັບບັນຫາດັ່ງກ່າວແນວໃດ?

ການທີ່ຈະໄດ້ຮັບຄ່າຊົດເຊີຍ ຫຼື ສາມາດປຶກສາຫາລືກັບບໍລິສັດ ເພື່ອແກ້ໄຂບັນຫາດັ່ງກ່າວ ແມ່ນອາດຈະເປັນການງ່າຍກວ່າ ຖ້າບອກຊື່ຂອງທ່ານ ແລະ ແຈ້ງໃຫ້ເຂົາເຈົ້າຮູ້ວ່າຈະຕິດຕໍ່ກັບທ່ານໄດ້ແນວໃດ. ເຖິງແນວໃດກໍ່ຕາມ, ຖ້າທ່ານມີຄວາມຢ້ານກົວຕໍ່ການແກ້ແຄ້ນ ທ່ານສາມາດຍື່ນຄຳຮ້ອງທຸກໂດຍບໍ່ເປີດເຜີຍຊື່ຂອງທ່ານກໍ່ໄດ້.

## ຂັ້ນຕອນຕໍ່ໄປແມ່ນຫຍັງ ພາຍຫຼັງທີ່ທ່ານໄດ້ຍື່ນຄຳຮ້ອງທຸກ?

**ການຢັ້ງຢືນວ່າ ບໍລິສັດໄດ້ຮັບຄຳຮ້ອງທຸກຂອງທ່ານແລ້ວ ແລະ ຂໍ້ມູນ ກ່ຽວກັບ ວິທີການ ທີ່ຄຳຮ້ອງທຸກຂອງທ່ານຈະດຳເນີນການແກ້ໄຂແນວໃດ:** ພາຍຫຼັງທີ່ທ່ານໄດ້ຍື່ນຄຳຮ້ອງທຸກແລ້ວ ທ່ານຄວນໄດ້ຮັບຮູ້ຂໍ້ມູນ ກ່ຽວກັບ ການຢືນຢັນວ່າບໍລິສັດໄດ້ຮັບຄຳຮ້ອງທຸກຂອງທ່ານແທ້. ໃນເວລາດຽວກັນ, ບໍລິສັດຄວນສົ່ງຂໍ້ມູນໃຫ້ທ່ານ ກ່ຽວກັບ ວິທີການການດຳເນີນຄຳຮ້ອງທຸກຂອງທ່ານ ແລະ ຈະຕ້ອງເຮັດຫຍັງແດ່ໃນຂັ້ນຕອນຕໍ່ໄປ.




*ຮູບສະແດງ 9: ຜູ້ຕາງໜ້າຈາກຊຸມຊົນທ້ອງຖິ່ນ ຍື່ນຄຳຮ້ອງທຸກ ຕໍ່ກັບນັກລົງທຶນຢູ່ຫ້ອງການຂອງບໍລິສັດ ແລະ ລາວໄດ້ຮັບເລກທີ່ເອກະສານຂາເຂົ້າ ເພື່ອອ້າງອີງວ່າບໍລິສັດໄດ້ຮັບຄຳຮ້ອງທຸກແລ້ວ*

**ການກວດສອບຄວາມຖືກຕ້ອງຂອງຄຳຮ້ອງທຸກ ແລະ ການເກັບກຳຂໍ້ມູນຫຼັກຖານ:** ພາຍຫຼັງບໍລິສັດໄດ້ຮັບຄຳຮ້ອງທຸກ ແລະ ຢັ້ງຢືນວ່າໄດ້ຮັບເອກະສານຄຳຮ້ອງທຸກຂອງທ່ານແລ້ວ, ເອກະສານຈະຕ້ອງຖືກກວດສອບກ່ຽວກັບ ຄວາມຖືກຕ້ອງຂອງຄຳຮ້ອງທຸກດັ່ງກ່າວ. ນັ້ນໝາຍຄວາມວ່າບໍລິສັດກຳລັງກວດເບິ່ງວ່າຄຳຮ້ອງທຸກຂອງທ່ານ ແມ່ນກ່ຽວຂ້ອງກັບຜົນກະທົບທາງດ້ານລົບຕໍ່ສັງຄົມ ຫຼື ສິ່ງແວດລ້ອມ ທີ່ເກີດຈາກກິດຈະກຳການລົງທຶນຂອງບໍລິສັດແນວໃດ. ທາງບໍລິສັດອາດຈະຕິດຕໍ່ຫາທ່ານ ຖ້າເຂົາເຈົ້າຫາກຕ້ອງການຂໍ້ມູນເພີ່ມເຕີມ ຫຼື ຕ້ອງການຄວາມກະຈ່າງແຈ້ງຂອງຂໍ້ມູນ. ບໍລິສັດຈະຕ້ອງໄດ້ດຳເນີນຕາມຂັ້ນຕອນດັ່ງກ່າວ ເພື່ອຮັບປະກັນວ່າພວກເຂົາຈະສາມາດດຳເນີນການແກ້ໄຂບັນຫານັ້ນໄດ້ແທ້. ຖ້າເປັນບັນຫາທີ່ພວກເຂົາສາມາດດຳເນີນການໄດ້, ນັ້ນກໍ່ໝາຍຄວາມວ່າເຂົາເຈົ້າມີພັນທະທີ່ຈະດຳເນີນການແກ້ໄຂຄຳຮ້ອງທຸກດັ່ງກ່າວ.



*ຮູບສະແດງ 10: ຜູ້ຕາງໜ້າບໍລິສັດກວດສອບຄຳຮ້ອງທຸກ (ຮູບດ້ານຊ້າຍມື) ແລະ ເກັບກຳເອົາຂໍ້ມູນຫຼັກຖານ ກ່ຽວກັບ ຄຳຮ້ອງ ທຸກ (ຮູບດ້ານຂວາມື)*

**ການແກ້ໄຂແບບປະນີປະນອມ:** ຂັ້ນຕອນນີ້ ແມ່ນເປັນການລິເລີ່ມຂະບວນການດຳເນີນການແກ້ໄຂຂໍ້ຂັດແຍ່ງ. ບໍລິສັດບໍ່ສາມາດຕັດສິນຂໍ້ຂັດແຍ້ງດັ່ງກ່າວໄດ້ໂດຍກົງ ເຊິ່ງບໍລິສັດຕ້ອງໄດ້ດຳເນີນ ການປຶກສາຫາລື ຫຼື ເຈລະຈາ ເຊິ່ງກັນ ແລະ ກັນ ຈົນກວ່າຈະໄດ້ຮັບຂໍ້ສະຫຼຸບໃນການແກ້ໄຂບັນຫາ. ຖ້າຫາກວ່າທ່ານ ແລະ ບໍລິສັດ ສາມາດຕົກລົງເຫັນດີນຳກັນນັ້ນກໍ່ໝາຍ ຄວາມວ່າຄຳຮ້ອງທຸກຖືກດຳເນີນແກ້ໄຂ. ວິທີການແກ້ໄຂບັນຫາຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍ ແມ່ນເປັນວິທີການພື້ນຖານທີ່ຖືກນຳໃຊ້ຫຼາຍທີ່ສຸດໃນທົ່ວໄປ. ເຊິ່ງໃນນີ້ກໍ່ໝາຍຄວາມວ່າ ຂະບວນໄກ່ເກ່ຍຈະມີບຸກຄົນທີສາມ, ບຸກຄົນທີ່ເປັນເອກະລາດ, ຜູ້ໄກ່ເກ່ຍ ຈະເປັນຜູ້ດຳເນີນຂະບວນເຈລະຈາຕົກລົງກັນ. ຜູ້ໄກ່ເກ່ຍພຽງແຕ່ເຂົ້າໄປມີສ່ວນກ່ຽວຂ້ອງ ເພື່ອນຳພາຂະບວນການຕົກລົງເຫັນດີກັນ ເພື່ອຮັບປະກັນວ່າທ່ານ ແລະ ບໍລິສັດ ໄດ້ດຳເນີນການໄກ່ເກ່ຍບັນຫາຢ່າງເປັນທຳ, ສາມາດສະເໜີຜົນປະ ໂຫຍດ ແລະ ຄວາມຕ້ອງການຂອງທ່ານ ຫຼັງຈາກນັ້ນຈຶ່ງມາຕັດສິນໃນການແກ້ໄຂຮ່ວມກັນ. ຜູ້ໄກ່ເກ່ຍຈະບໍ່ໄດ້ຮັບອະນຸຍາດໃຫ້ຕັດສິນບັນຫາຢ່າງເດັດຂາດ.

ໃນຂະບວນການເຈລະຈາ ຫຼື ການໄກ່ເກ່ຍ, ທ່ານສາມາດໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຈາກທີ່ປຶກສາທາງດ້ານກົດໝາຍ ເຊິ່ງເປັນຜູ້ທີ່ທ່ານສາມາດປຶກສາຫາລືບັນຫາທີ່ສຳຄັນໃນລະຫວ່າງ ການປະຊຸມໄດ້. ຕົວຢ່າງທີ່ປຶກສາທາງດ້ານກົດ ໝາຍທີ່ກ່າວເຖິງນີ້ ສາມາດເປັນບຸກຄົນທີ່ມາຈາກອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO) ຫຼື ອົງການຈັດຕັ້ງທາງສັງຄົມ (CSO) ກໍ່ໄດ້.

**ການແກ້ໄຂທີ່ທັນເວລາ ແລະ ມີຄວາມເໝາະສົມ:** ຖ້າຫາກວ່າບໍລິສັດໄດ້ສ້າງຜົນເສຍຫາຍຕໍ່ທ່ານ, ທ່ານມີສິດທີ່ຈະສະເໜີເພື່ອແກ້ໄຂບັນຫາ. ທ່ານຈຳເປັນໄດ້ຕ້ອງເຈລະຈາ ໃນເວລາທີ່ກຳລັງດຳເນີນຂະບວນການແກ້ໄຂຂໍ້ຂັດແຍ່ງ. ບາງເທື່ອບໍລິສັດກໍ່ອາດຈະມີລາຍລະອຽດ ກ່ຽວກັບ




*ຮູບສະແດງ 11: ຜູ້ຕາງໜ້າບໍລິສັດ ແລະ ຊຸມຊົນທ້ອງຖິ່ນດຳເນີນການເຈລະຈາ ເພື່ອແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການລົງທຶນ. ການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຍັງສາມາດເຮັດໄດ້ດ້ວຍການສະໜັບສະໜູນຊ່ວຍເຫຼືອຂອງຜູ້ໄກ່ເກ່ຍທີ່ເປັນກາງ*




*ຮູບສະແດງ 12: ນັກລົງທຶນ ແລະ ຜູ້ຕາງໜ້າຊຸມຊົນທ້ອງຖິ່ນໄດ້ເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັນ ພາຍຫຼັງຂໍ້ຂັດແຍ່ງໄດ້ຮັບການແກ້ໄຂ ແລະ ຮັບປະກັນວ່າຜົນກະທົບທາງດ້ານລົບຈະບໍ່ເກີດຂຶ້ນຕື່ມ*

ສະພາບບັນຫາ ແລະ ຫຼາຍຮູບແບບ ເພື່ອເປັນທາງເລືອກໃນການແກ້ໄຂບັນຫາ (ເຊັ່ນ: ການຊົດເຊີຍ ຫຼື ການປົວແປງຄືນ ແລະ ອື່ນໆ) ໂດຍມີການລະບຸ ກ່ຽວກັບ ລາຍລະອຽດຜູ້ໃດທີ່ມີສິດໄດ້ຮັບການແກ້ໄຂປະເພດໃດ ແລະ ພາຍໃຕ້ເງື່ອນໄຂອັນໃດ.

## ທ່ານສາມາດຄາດຫວັງຜົນໄດ້ຮັບ ຫຍັງແດ່?

ຖ້າບັນຫາຄວາມກັງວົນຂອງທ່ານສົມເຫດສົມຜົນ ແລະ ບໍລິສັດຕ້ອງຮັບຜິດຊອບ ຕໍ່ຄ່າເສຍຫາຍຂອງທ່ານ, ການຮ້ອງທຸກ ແມ່ນສິ່ງຜົນເຮັດໃຫ້ບໍລິສັດ ປ່ຽນແປງວິທີການດໍາເນີນງານ ເພື່ອບໍ່ເຮັດເກີດຄວາມເສຍຫາຍຕໍ່ທ່ານຕື່ມອີກ. ບໍລິສັດຄວນຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນໄປແລ້ວນັ້ນ. ທ່ານຈະຕ້ອງຕັດສິນໃຈຮ່ວມກັນກັບບໍລິສັດວ່າ ຈະດໍາເນີນການແນວໃດໃນອະນາຄົດ ຕົວຢ່າງ ເຊັ່ນ: ບໍລິສັດຄວນຈະລະເວັ້ນການນໍາໃຊ້ທີ່ດິນຂອງທ່ານ ຫຼື ຊົດເຊີຍໃຫ້ທ່ານຕາມຄວາມເໝາະສົມ. ຖ້າບໍ່ສາມາດຕົກລົງກັນໄດ້, ທ່ານຍັງມີທາງເລືອກ ໂດຍຍື່ນຄໍາຮ້ອງທຸກຫາ ໜ່ວຍງານທີ່ຮັບຜິດຊອບ (ເບິ່ງພາກທີ 3).

## ທ່ານຈະມີຄວາມສ່ຽງບໍ ຈາກການນໍາໃຊ້ກົນໄກການຮ້ອງທຸກຂອງບໍລິສັດ?

ກົນໄກຮ້ອງທຸກຂອງບໍລິສັດ ແມ່ນໄດ້ຮັບການສ້າງຕັ້ງຂຶ້ນຕາມມາດຕະຖານສາກົນ ຈະບໍ່ມີຄວາມສ່ຽງຫຍັງຕໍ່ຜູ້ຮ້ອງທຸກ. ອີງຕາມມາດຕະຖານສາກົນ, ບໍລິສັດທີ່ມີກົນໄກການຮ້ອງທຸກຕ້ອງໄດ້ປົກປ້ອງປະຊາຊົນຜູ້ທີ່ ລາຍງານ ກ່ຽວກັບ ຜົນກະ ທົບທາງດ້ານລົບທີ່ທາງບໍລິສັດສ້າງຂຶ້ນ. ບໍລິສັດຕ້ອງຮັບປະກັນວ່າຂໍ້ມູນສ່ວນຕົວຂອງທ່ານຈະບໍ່ຖືກເປີດເຜີຍ ແລະ ຮັບປະກັນຄວາມປອດໄພຈາກການຖືກລົງໂທດ, ການແກ້ແຄ້ນ, ການນາບຂູ່, ການຕອບໂຕ້ ແລະ ອື່ນໆ. ເຊິ່ງເອີ້ນວ່າ ການປົກປ້ອງຜູ້ແຈ້ງເບາະແສ ແລະ ສິ່ງເຫຼົ່ານີ້ກໍ່ໄດ້ຮັບການປົກປ້ອງ ພາຍໃຕ້ກົດໝາຍສາກົນ.

ທ່ານສາມາດຍື່ນຄໍາຮ້ອງທຸກໂດຍບໍ່ເປີດເຜີຍ ຊື່ ຫຼື ຂໍ້ມູນສ່ວນຕົວ ຂອງທ່ານ ຖ້າຫາກທ່ານມີຄວາມສົງໄສວ່າ ບໍລິສັດຈະດໍາເນີນການທີ່ສອດຄ່ອງກັບມາດຕະຖານສາກົນ ຫຼື ບໍ ແລະ ຍັງຢ້ານກົວຕໍ່ການແກ້ແຄ້ນ. ນອກຈາກນີ້, ທ່ານຍັງສາມາດຮ້ອງຂໍໃຫ້ອົງການຈັດຕັ້ງ

ທີ່ບໍ່ຂຶ້ນກັບລັດຖະບານ (NGO) ຫຼື ອົງການຈັດຕັ້ງທາງສັງຄົມ (CSO) ເພື່ອຊ່ວຍດຳເນີນການຮ້ອງ ທຸກແທນທ່ານກໍ່ໄດ້. ອົງການ NGO/CSO ດັ່ງກ່າວຍັງສາມາດຊ່ວຍທ່ານປະກອບເອກະສານການຮ້ອງທຸກ, ນຳພາ ແລະ ສະໜັບສະໜູນໃຫ້ການຊ່ວຍເຫຼືອທ່ານ ໃນແຕ່ລະຂະບວນການຮ້ອງທຸກ ແຕ່ຕົ້ນຈົນຈົບ.

## ທ່ານຈະເສຍຄ່າໃຊ້ຈ່າຍຫຼາຍປານໃດ?

ຖ້າທ່ານນຳໃຊ້ກົນໄກການແກ້ໄຂຄຳຮ້ອງທຸກຂອງບໍລິສັດ, ທ່ານຈະບໍ່ໄດ້ເສຍຄ່າໃຊ້ຈ່າຍຫຍັງ. ເຊິ່ງມີພຽງແຕ່ຄ່າໃຊ້ຈ່າຍເລັກນ້ອຍຈຳນວນໜຶ່ງ ທີ່ທ່ານຈະຕ້ອງໄດ້ຈ່າຍເອງ ເຊັ່ນ: ຄ່າໃຊ້ຈ່າຍໃນການສື່ສານ, ການຂົນສົ່ງ ແລະ ອາຫານການກິນ ໃນລະຫວ່າງການເດີນທາງໄປຫາບໍລິສັດ.

# 3. ການຍື່ນຄຳຮ້ອງທຸກ ຜ່ານກົນໄກການແກ້ໄຂຄຳຮ້ອງທຸກຂອງລັດຖະບານ

ຖ້າທ່ານໄດ້ຮັບຜົນກະທົບຈາກບໍລິສັດທີ່ບໍ່ມີກົນໄກການຮ້ອງທຸກ ຫຼື ທ່ານບໍ່ມີຂໍ້ມູນ ກ່ຽວກັບ ບໍລິສັດ ຫຼື ທ່ານບໍ່ພໍໃຈກັບຜົນໄດ້ຮັບຈາກການແກ້ໄຂຂອງບໍລິສັດ ຫຼື ທ່ານບໍ່ຢາກຕິດຕໍ່ຫາບໍລິສັດໂດຍກົງ, ທ່ານກໍ່ສາມາດຍື່ນຄຳຮ້ອງທຸກໄປຫາໜ່ວຍງານຮັບຜິດຊອບ ຕາມກົນໄກການແກ້ໄຂການຮ້ອງທຸກ ຂອງພາກລັດຖະບານ ກໍ່ໄດ້.

## ກົນໄກການແກ້ໄຂຄຳຮ້ອງທຸກຂອງລັດ ແມ່ນຫຍັງ?

ລັດຖະບານ ມີ ສາມ ກົນໄກການແກ້ໄຂຄຳຮ້ອງທຸກ ທີ່ເຊື່ອມໂຍງກັນ ຄື: ກົນໄກທາງບໍລິຫານ, ກົນໄກທາງຕຸລາການ ແລະ ກົນໄກທາງນິຕິບັນຍັດ. ກົນໄກດ້ານບໍລິຫານ ຜ່ານການແກ້ໄຂ ຂອງອົງການປົກຄອງຢູ່ ຂັ້ນບ້ານ, ເມືອງ, ແຂວງ ແລະ ສູນກາງ ເຊັ່ນ: ອຳນາດການປົກຄອງ ບ້ານ, ເມືອງ, ແຂວງ ຫຼື ກະຊວງ. ກົນໄກທາງຕຸລາການ ຈະດຳເນີນຕາມລະບົບຍຸຕິທຳ ຜ່ານສານປະຊາຊົນ, ສານເຂດ, ສານນະຄອນຫຼວງວຽງຈັນ, ສານແຂວງ, ສານພາກ ແລະ ສານປະຊາຊົນສູງສຸດ. ສ່ວນກົນໄກທາງນິຕິບັນຍັດ ແມ່ນຜ່ານ ອົງການນິຕິບັນຍັດ ຄື: ສະພາປະຊາຊົນແຂວງ (ສພຊຂ) ແລະ ສະພາແຫ່ງຊາດ. ບໍ່ວ່າຈະເປັນກົນໄກໃດກໍ່ຕາມ ສຳລັບຂັ້ນຕອນ ຕ້ອງຜ່ານການດຳເນີນການແກ້ໄຂໂດຍອົງການບໍລິຫານ. ເຊິ່ງໝາຍຄວາມວ່າ ຈະດຳເນີນການແກ້ໄຂໂດຍອຳນາດການປົກຄອງບ້ານ ຫຼື ຜ່ານຊ່ອງທາງອື່ນໆ, ດຳເນີນການໂດຍອົງການປົກຄອງຂັ້ນເມືອງ, ຂັ້ນແຂວງ ຫຼື ອົງການປົກຄອງຂັ້ນສູນກາງ ເຊິ່ງຂຶ້ນກັບວ່າແມ່ນພາກສ່ວນໃດເປັນຜູ້ອະນຸມັດການລົງທຶນທີ່ເຮັດໃຫ້ເກີດມີຂໍ້ຂັດແຍ່ງດັ່ງກ່າວ. ແຕ່ໂດຍທົ່ວໄປແລ້ວ ແມ່ນຂ້ອນຂ້າງພົບຄວາມຫຍຸ້ງຍາກ ໃນການຊອກຮູ້ຂໍ້ມູນວ່າ ແມ່ນອົງການປົກຄອງຂັ້ນໃດທີ່ໄດ້ອະນຸມັດການລົງ ທຶນນັ້ນ. ແຕ່ສິ່ງດັ່ງກ່າວນີ້ບໍ່ແມ່ນບັນຫາ, ບໍ່ວ່າຈະເປັນກໍລະນີໃດກໍ່ຕາມ ທ່ານກໍ່ສາມາດຕິດຕໍ່ພົວພັນກັບອຳນາດການປົກຄອງບ້ານ ໄດ້ຕະຫຼອດເວລາ. ເຊິ່ງຂຶ້ນຢູ່ກັບວ່າ ວິທີການແກ້ໄຂຄຳຮ້ອງທຸກ ແລະ ຄວາມພໍໃຈກັບຜົນຂອງການແກ້ໄຂ ເປັນແນວໃດ, ຂໍ້ຂັດແຍ້ງ ຫຼື ຄຳຮ້ອງທຸກຂອງທ່ານສາມາດແກ້ໄຂໄດ້ໂດຍກົງ ຈາກອົງການບໍລິຫານ ຫຼື ທ່ານຕ້ອງຍື່ນສຳນວນຄະດີຄືນໃໝ່ ຕໍ່ກັບອົງການປົກຄອງຂັ້ນສູງກວ່າ ຫຼື ສານປະຊາຊົນ.

ຜົນໄດ້ຮັບ ຂອງຂະບວນການເຫຼົ່ານີ້ ແມ່ນມາຈາກການໄກ່ເກ່ຍ ຫຼື ການຕົກລົງ ຂອງຫົວໜ້າອົງການປົກຄອງ ແຕ່ລະຂັ້ນ ເຊັ່ນ: ນາຍບ້ານ, ເຈົ້າເມືອງ/ເຈົ້າແຂວງ ຫຼື ລັດຖະມົນຕີ. ແຕ່ການຕົກລົງດັ່ງກ່າວບໍ່ເປັນຂໍ້ຜູກມັດທາງກົດໝາຍ.




*ຮູບສະແດງ 13: ພາບລວມຂອງກົນໄກ ການແກ້ໄຂຂໍ້ຂັດແຍ່ງ ຂອງລັດຖະບານ, ຕາມມາດຕາທີ່ 16-21 ຂອງກົດໝາຍ ວ່າດ້ວຍ ກົນໄກແກ້ໄຂການຮ້ອງທຸກ ສະບັບປັບປຸງປີ 2016*




*ຮູບສະແດງ 14: ຊຸມຊົນສາມາດຍື່ນຄໍາຮ້ອງທຸກ ຜ່ານສາມຊ່ອງທາງຂອງລັດຖະບານ (ບໍລິຫານ, ຕຸລາການ ແລະ ນິຕິບັນຍັດ)*

## ທ່ານສາມາດຍື່ນຄຳຮ້ອງທຸກ ຜ່ານກົນໄກການແກ້ໄຂຄຳຮ້ອງທຸກຂອງລັດຖະບານໄດ້ໃນກໍລະນີໃດ?

ເມື່ອໃດກໍ່ຕາມທີ່ທ່ານໄດ້ຮັບຜົນກະທົບທາງດ້ານລົບ ຈາກການດຳເນີນທຸລະກິດຂອງນັກລົງທຶນ, ທ່ານສາມາດຍື່ນຄຳຮ້ອງທຸກຕໍ່ກົນໄກການແກ້ໄຂຄຳຮ້ອງທຸກຂອງລັດຖະບານໄດ້. ຂັ້ນຕອນທຳອິດ ທ່ານຕ້ອງໄດ້ຍື່ນຄຳຮ້ອງທຸກຂອງທ່ານ ເພື່ອສະ ເໜີ ການແກ້ໄຂຫາຜ່ານອົງການປົກຄອງທີ່ກ່ຽວຂ້ອງ (ກົນໄກທາງບໍລິຫານ) ເຊັ່ນ: ອົງການປົກຄອງຂັ້ນບ້ານ, ອົງການປົກຄອງຂັ້ນເມືອງ, ອົງການປົກຄອງຂັ້ນແຂວງ ຫຼື ຂັ້ນກະຊວງ. ອີງຕາມກົດໝາຍວ່າດ້ວຍກົນໄກແກ້ໄຂຄຳຮ້ອງທຸກສະບັບປີ 2016, ອົງການກວດກາລັດຂັ້ນຕ່າງໆ ຈະຖືກມອບໝາຍຈາກ ອົງການປົກຄອງຂັ້ນດັ່ງກ່າວ ເພື່ອປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ຕົວຢ່າງ: ສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ (ຫຊສ) ຖ້າເປັນບັນຫາຂໍ້ຂັດແຍ່ງດ້ານທີ່ດິນ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ຖ້າຫາກ ກ່ຽວກັບ ບັນຫາດ້ານແຮງງານ ແລະ ອື່ນໆ ເພື່ອແກ້ໄຂ (ເບິ່ງມາດຕາ 19, 20 ແລະ 21). ຖ້າເປັນຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ທ່ານສາມາດຍື່ນຄຳຮ້ອງທຸກໂດຍກົງຫາ ຫຊສ.

ກໍລະນີ ຖ້າບໍ່ມີບົດບັນທຶກຄວາມເຂົ້າໃຈ ຫຼື ຂໍ້ຕົກລົງໃດໆ ລະຫວ່າງ ນັກລົງທຶນ ແລະ ລັດຖະບານ, ທ່ານສາມາດຍື່ນ ຄຳຮ້ອງທຸກຫາສານປະຊາຊົນໂດຍກົງ. ເຖິງແນວໃດກໍ່ຕາມ, ປົກກະຕິແລ້ວສານປະຊາຊົນຈະຖາມວ່າ ຂໍ້ຂັດແຍ່ງດັ່ງກ່າວໄດ້ມີການໄກ່ເກ່ຍຢູ່ຂັ້ນບ້ານແລ້ວບໍ ແລະ ເຂົາເຈົ້າຈະຖາມເບິ່ງ ບົດບັນທຶກໃນການໄກ່ເກ່ຍດັ່ງກ່າວ. ສຳລັບກໍລະນີອື່ນໆ, ທ່ານຈະຕ້ອງໄດ້ຍື່ນຄຳຮ້ອງທຸກຂອງທ່ານ ຕໍ່ອົງການປົກຄອງທີ່ອະນຸມັດ ໂຄງການລົງທຶນ ດັ່ງກ່າວກ່ອນ.

## ທ່ານຈະຍື່ນຄຳຮ້ອງທຸກໄດ້ແນວໃດ?

ຖ້າທ່ານຕ້ອງການ, ທ່ານສາມາດຍື່ນຄຳຮ້ອງທຸກຂອງທ່ານໄປຫາອຳນາດການປົກຄອງບ້ານ. ເຊິ່ງອຳນາດການປົກຄອງບ້ານ ມີໜ້າທີ່ ດຳເນີນການໄກ່ເກ່ຍບັນຫາຂໍ້ຂັດແຍ່ງຂອງທ່ານ ໂດຍບໍ່ກ່ຽວກັບວ່າ ແມ່ນພາກສ່ວນໃດອະນຸມັດໂຄງການລົງທຶນ. ອີກທາງເລືອກໜຶ່ງ, ທ່ານສາມາດ ຍື່ນຄຳຮ້ອງທຸກຂອງທ່ານ ຕໍ່ອົງການຈັດຕັ້ງທີ່ອະນຸມັດໂຄງການລົງທຶນນັ້ນໂດຍກົງ ຕົວຢ່າງ: ຖ້າໂຄງການລົງທຶນທີ່ສ້າງຜົນກະທົບທາງດ້ານລົບຕໍ່ພື້ນທີ່ນາຂອງທ່ານ ຊຶ່ງໄດ້ຮັບການອະນຸມັດຈາກເຈົ້າແຂວງ, ທ່ານກໍ່ສາມາດຍື່ນຄຳຮ້ອງທຸກ ຕໍ່ອົງການປົກຄອງບ້ານ ຫຼື ຍື່ນໂດຍກົງຕໍ່ ອົງການປົກຄອງຂັ້ນແຂວງ. ຫຼັງຈາກນັ້ນ ເຈົ້າແຂວງຈະມອບໃຫ້ ອົງການກວດກາລັດຂັ້ນແຂວງ ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ຖ້າເປັນບັນຫາທົ່ວໄປ ກ່ຽວກັບ ການລົງທຶນແມ່ນຂະແໜງແຜນການ ແລະ ການລົງທຶນ, ຖ້າເປັນບັນຫາດ້ານທີ່ດິນ ແມ່ນ ຫຊສ, ບັນຫາກ່ຽວຂ້ອງກັບແຮງງານ ແມ່ນຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອດຳເນີນການແກ້ໄຂບັນຫາຂໍ້ຂັດແຍ່ງ (ເບິ່ງມາດຕາ 20 ຂອງກົດໝາຍວ່າ

ດ້ວຍກົນໄກການແກ້ໄຂຂໍ້ຂັດແຍ່ງ ສະບັບປີ 2016).

ອີງຕາມກົດໝາຍສົ່ງເສີມການລົງທຶນ (ມາດຕາ 94 ແລະ 95), ຄຳຮ້ອງທຸກ ຄວນຍື່ນຕໍ່ ຫ້ອງການຄຸ້ມຄອງ ການລົງທຶນປະຕູດຽວ ທີ່ຕັ້ງຢູ່ ພະແນກແຜນການ ແລະ ການລົງທຶນຂັ້ນແຂວງ ແລະ ຢູ່ກະຊວງແຜນການ ແລະ ການລົງທຶນ ຂັ້ນສູນກາງ.

ສຳລັບການໄກ່ເກ່ຍຂໍ້ຂັດແຍ່ງຢູ່ຂັ້ນບ້ານ, ຜູ້ຮ້ອງທຸກສາມາດຍື່ນຄຳຮ້ອງເປັນລາຍລັກອັກສອນ ຫຼື ດ້ວຍປາກເປົ່າ (ຖ້າຜູ້ຮ້ອງທຸກບໍ່ຮູ້ໜັງສື). ສຳລັບກົນໄກທາງດ້ານບໍລິຫານ, ຕຸລາການ ແລະ ນິຕິບັນຍັດ ຄຳຮ້ອງທຸກຕ້ອງຂຽນເປັນພາສາລາວ ແລະ ຄວນຈະປະກອບມີ:

- ຊື່ ແລະ ທີ່ຢູ່ ຂອງອົງການຈັດຕັ້ງ ທີ່ຜູ້ຮ້ອງທຸກຍື່ນຕໍ່;
- ຊື່ເຕັມ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ອາໄສ, ເບີໂທລະສັບ ແລະ ອີເມວຂອງຜູ້ຮ້ອງທຸກ;
- ສັງລວມຫຍໍ້ ກ່ຽວກັບ ຄວາມເປັນມາຂອງຂໍ້ຂັດແຍ່ງ, ສາຍເຫດ ແລະ ອື່ນໆ, ຜົນຂອງການແກ້ໄຂກ່ອນໜ້ານີ້ (ຖ້າມີ), ບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂ ແລະ ຂໍ້ສະເໜີ ເພື່ອໃຫ້ພິຈາລະນາຕື່ມ ແລະ ຫຼັກຖານທີ່ກ່ຽວຂ້ອງ (ຖ້າມີ);
- ສະຖານທີ່, ວັນທີ ແລະ ລາຍເຊັນຂອງຜູ້ຮ້ອງທຸກ.

ປະຊາຊົນທີ່ມີບັນຫາຂໍ້ຂັດແຍ່ງ ສາມາດເຂົ້າເຖິງຂະບວນຍຸຕິທຳ ໄດ້ໂດຍການຂໍຄວາມຊ່ວຍເຫຼືອທາງດ້ານກົດໝາຍຢູ່ຂັ້ນຕ່າງໆ ເຊັ່ນ: ຫ້ອງການຍຸຕິທຳເມືອງ, ພະແນກຍຸຕິທຳແຂວງ ແລະ ກົມສົ່ງເສີມຂະບວນການຍຸຕິທຳ ຂອງກະຊວງຍຸຕິທຳ.

ເງື່ອນໄຂໃນການໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍມີ ດັ່ງລຸ່ມນີ້:

1. ທຸກຍາກ
2. ຢູ່ໃນກຸ່ມສ່ຽງ
3. ເດັກນ້ອຍທີ່ຕ້ອງການການປົກປ້ອງພິເສດ
4. ຜູ້ກະທຳຜິດ ທີ່ກົດໝາຍກຳນົດໃຫ້ມີທະນາຍຄວາມຊ່ວຍ
5. ຄົນພິການ
6. ແມ່ຍິງ ແລະ ເດັກນ້ອຍ ທີ່ຕົກເປັນເຫຍື່ອຂອງການກົດຂີ່ຂູດຮີດ
7. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ການໃຫ້ຊ່ວຍເຫຼືອທາງດ້ານກົດໝາຍ ມີ 4 ປະເພດຄື:

1. ໃຫ້ຂໍ້ມູນທີ່ກ່ຽວຂ້ອງທີ່ຈຳເປັນ
2. ໃຫ້ຄຳປຶກສາທາງດ້ານກົດໝາຍ
3. ຊ່ວຍໃນການກະກຽມເອກະສານທັງຫມົດ
4. ບຸກຄົນ ເປັນຕົວແທນ ໃນລະຫວ່າງການດຳເນີນຄະດີທາງດ້ານກົດໝາຍ

## ຂັ້ນຕອນຕໍ່ໄປແມ່ນຫຍັງ ພາຍຫຼັງທີ່ທ່ານໄດ້ຍື່ນຄຳຮ້ອງທຸກແລ້ວ?

ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ: ອຳນາດການປົກຄອງບ້ານ ຈະດຳເນີນຕາມຂະບວນການໄກ່ເກ່ຍ. ຖ້າຫາກທ່ານເຫັນດີ ແກ້ໄຂຜ່ານຂະບວນການໄກເກ່ຍ, ທ່ານກໍ່ສາມາດດຳເນີນການແກ້ໄຂກັບບໍລິສັດເລີຍ (ສຳລັບລາຍລະອຽດ ເບິ່ງຢູ່ພາກທີ 4). ຖ້າທ່ານບໍ່ຕ້ອງການດຳເນີນການໄກ່ເກ່ຍ, ອຳນາດການປົກຄອງບ້ານ ຈະສືບສວນບັນຫາ ແລະ ຕົງລົງ ກ່ຽວກັບ ຜົນຂອງການສືບສວນ ພາຍໃນ 20 ວັນ ນັບຈາກມື້ທີ່ມີການຮ້ອງທຸກ (ເບິ່ງມາດຕາ 18 ຂອງກົດໝາຍວ່າດ້ວຍກົນໄກການແກ້ໄຂຄຳຮ້ອງ ທຸກ ສະບັບປັບປຸງປີ 2016).

ການແກ້ໄຂຂໍ້ຂັດແຍ່ງຢູ່ຂັ້ນເມືອງ: ຖ້າຫາກຂໍ້ຂັດແຍ່ງບໍ່ສາມາດແກ້ໄຂຢູ່ຂັ້ນບ້ານໄດ້ ຫຼື ທ່ານບໍ່ພໍໃຈກັບຜົນຂອງການແກ້ໄຂ ທ່ານກໍ່ສາມາດຮ້ອງທຸກຕໍ່ ອົງການປົກຄອງຂັ້ນເມືອງ. ໃນຂະນະດຽວກັນ, ຖ້າອົງການປົກຄອງຂັ້ນເມືອງຫາກມີສ່ວນກ່ຽວຂ້ອງ ຫຼື ມີສ່ວນຮັບຜິດຊອບຕໍ່ຂໍ້ຂັດແຍ່ງດັ່ງກ່າວ, ທ່ານກໍ່ສາມາດຍື່ນຄຳຮ້ອງທຸກນັ້ນ ຕໍ່ອົງການປົກຄອງຂັ້ນເມືອງທີ່ອະນຸ ມັດໂຄງການລົງທຶນດັ່ງກ່າວໄດ້ເລີຍ. ນອກຈາກນີ້, ທ່ານກໍ່ສາມາດຍື່ນຄຳຮ້ອງທຸກຕໍ່ອົງການປົກຄອງຂັ້ນເມືອງໄດ້ ຖ້າຫາກທ່ານບໍ່ພໍໃຈກັບຜົນຂອງການແກ້ໄຂຢູ່ຂັ້ນບ້ານ. ສຸດທ້າຍ, ຖ້າຫາກອົງການປົກຄອງຂັ້ນເມືອງເປັນຜູ້ອະນຸມັດໂຄງການລົງທຶນ ດັ່ງກ່າວ. ໃນກໍລະນີນີ້, ທ່ານສາມາດຍື່ນຄຳຮ້ອງທຸກໂດຍກົງ ຕໍ່ອົງການປົກຄອງຂັ້ນເມືອງໄດ້ເລີຍ ໂດຍທີ່ທ່ານບໍ່ຈຳເປັນຕ້ອງຍື່ນຄຳຮ້ອງທຸກຢູ່ຂັ້ນບ້ານກ່ອນ (ເບິ່ງມາດຕາ 19 ຂອງກົດໝາຍວ່າດ້ວຍກົນໄກການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2016).

ຫ້ອງການກວດກາລັດຂັ້ນເມືອງ ມີໜ້າທີ່ປະສານສົມທົບກັບຫ້ອງການທີ່ກ່ຽວຂ້ອງ ເພື່ອສືບສວນຂໍ້ຂັດແຍ່ງ, ເກັບກຳຂໍ້ມູນ ຫຼັກຖານ ແລະ ລາຍງານໃຫ້ເຈົ້າເມືອງ ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ພາຍໃນ 30 ວັນ ນັບຕັ້ງແຕ່ມື້ທີ່ໄດ້ຮັບຄຳຮ້ອງທຸກ ເປັນຕົ້ນມາ.

ການແກ້ໄຂຂໍ້ຂັດແຍ່ງຢູ່ຂັ້ນແຂວງ: ຖ້າຫາກຂໍ້ຂັດແຍ່ງບໍ່ສາມາດແກ້ໄຂໄດ້ຢູ່ຂັ້ນເມືອງ ຫຼື ທ່ານບໍ່ພໍໃຈກັບຜົນ ຂອງການແກ້ໄຂ ແມ່ນສາມາດຍື່ນຄຳຮ້ອງທຸກ ຕໍ່ຂັ້ນແຂວງ. ໃນຂະນະດຽວກັນ, ຖ້າອົງການປົກຄອງຂັ້ນແຂວງຫາກມີສ່ວນກ່ຽວ ຂ້ອງ ຫຼື ມີສ່ວນຮັບຜິດຊອບຕໍ່ຂໍ້ຂັດແຍ່ງດັ່ງກ່າວ ທ່ານສາມາດຍື່ນຄຳຮ້ອງທຸກ ຕໍ່ອົງການປົກຄອງຂັ້ນແຂວງທີ່ອະນຸມັດການລົງທຶນດັ່ງກ່າວນັ້ນໄດ້ເລີຍ. ນອກຈາກນີ້, ທ່ານກໍ່ສາມາດຍື່ນຄຳຮ້ອງທຸກຕໍ່ອົງການປົກຄອງຂັ້ນແຂວງໄດ້ ຖ້າຫາກທ່ານບໍ່ພໍໃຈກັບຜົນ ຂອງການແກ້ໄຂ ຂອງອົງການປົກຄອງຂັ້ນເມືອງ. ສຸດທ້າຍ, ຖ້າຫາກອົງການປົກຄອງຂັ້ນແຂວງເປັນຜູ້ອະນຸມັດການລົງ ທຶນດັ່ງກ່າວ, ໃນກໍລະນີນີ້ ທ່ານສາມາດຍື່ນຄຳຮ້ອງທຸກໂດຍກົງ ຕໍ່ອົງການປົກຄອງຂັ້ນແຂວງໄດ້ເລີຍ ໂດຍທີ່ທ່ານບໍ່ຈຳເປັນຕ້ອງຍື່ນຄຳຮ້ອງທຸກຢູ່ໃນຂັ້ນບ້ານ ຫຼື ຂັ້ນເມືອງກ່ອນ (ເບິ່ງມາດຕາ 20 ຂອງກົດໝາຍວ່າດ້ວຍກົນໄກການແກ້ໄຂຄຳຮ້ອງທຸກ ສະ ບັບປັບປຸງປີ 2016).

ອົງການກວດກາລັດຂັ້ນແຂວງ ມີໜ້າທີ່ປະສານສົມທົບກັບ ພະແນກການທີ່ກ່ຽວຂ້ອງ ເພື່ອສືບສວນຂໍ້ຂັດແຍ່ງ, ເກັບ ກຳຂໍ້ມູນ ຫຼັກຖານ ແລະ ລາຍງານໃຫ້ເຈົ້າແຂວງ ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ພາຍໃນ 30 ວັນ ນັບຕັ້ງແຕ່ມື້ທີ່ໄດ້ຮັບຄຳຮ້ອງທຸກ ເປັນຕົ້ນມາ.

ການແກ້ໄຂຂໍ້ຂັດແຍ່ງຢູ່ຂັ້ນສູນກາງ: ຖ້າຫາກຂໍ້ຂັດແຍ່ງບໍ່ສາມາດແກ້ໄຂໄດ້ຢູ່ຂັ້ນແຂວງ ຫຼື ທ່ານບໍ່ພໍໃຈກັບຜົນ ຂອງການແກ້ໄຂ ສາມາດຍື່ນຄຳຮ້ອງທຸກ ຕໍ່ກະຊວງທີ່ກ່ຽວຂ້ອງ. ໃນຂະນະດຽວກັນ, ຖ້າຫາກກະຊວງໃດຫາກມີສ່ວນກ່ຽວຂ້ອງ ຫຼື ມີສ່ວນຮັບຜິດຊອບຕໍ່ຂໍ້ຂັດແຍ່ງດັ່ງກ່າວ ທ່ານສາມາດຍື່ນຄຳຮ້ອງທຸກນັ້ນຕໍ່ກະຊວງທີ່ອະນຸມັດໂຄງການລົງທຶນດັ່ງກ່າວນັ້ນໄດ້ເລີຍ. ນອກຈາກນີ້, ທ່ານກໍ່ສາມາດຍື່ນຄຳຮ້ອງທຸກຕໍ່ກະຊວງໄດ້ ຖ້າຫາກທ່ານບໍ່ພໍໃຈກັບຜົນຂອງການຕັດສິນຂອງອົງການປົກ ຄອງຂັ້ນແຂວງ. ສຸດທ້າຍ, ຖ້າຫາກກະຊວງໃດຫາກເປັນຜູ້ອະນຸມັດການລົງທຶນດັ່ງກ່າວ, ໃນກໍລະນີນີ້, ທ່ານສາມາດຍື່ນຄຳຮ້ອງ ທຸກໂດຍກົງ ຕໍ່ກະຊວງທີ່ກ່ຽວຂ້ອງໄດ້ເລີຍ ໂດຍທີ່ທ່ານບໍ່ຈຳເປັນຕ້ອງຍື່ນຄຳຮ້ອງທຸກຢູ່ໃນຂັ້ນບ້ານ ຫຼື ຂັ້ນເມືອງກ່ອນ (ເບິ່ງມາດຕາ 21 ຂອງກົດໝາຍວ່າດ້ວຍກົນໄກການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2016).

ກົມກວດກາ ຂອງກະຊວງທີ່ກ່ຽວຂ້ອງ ມີໜ້າທີ່ປະສານສົມທົບ ກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອສືບສວນຂໍ້ຂັດແຍ່ງ, ເກັບກຳຂໍ້ມູນຫຼັກຖານ ແລະ ລາຍງານໃຫ້ລັດຖະມົນຕີ ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ພາຍໃນ 45 ວັນ ນັບຕັ້ງແຕ່ມື້ທີ່ໄດ້ຮັບຄຳຮ້ອງທຸກ ເປັນຕົ້ນມາ.

ຖ້າຫາກທ່ານຍັງບໍ່ພໍໃຈກັບ ຜົນຂອງການແກ້ໄຂຢູ່ຂັ້ນສູນກາງ ຫຼື ກະຊວງ ທ່ານສາມາດຍື່ນຄຳຮ້ອງທຸກ ຕໍ່ນາຍົກລັດຖະມົນຕີ. ຫຼັງຈາກນັ້ນ ອົງການກວດກາລັດ ຈະຮັບຜິດຊອບດຳເນີນການແກ້ໄຂຄະດີດັ່ງກ່າວ.




*ຮູບສະແດງ 15: ຊ່ອງທາງການດຳເນີນການຮ້ອງທຸກຂອງທ່ານ ພາຍໃຕ້ກົນໄກທາງດ້ານບໍລິຫານ*

ການຍື່ນຄໍາຮ້ອງຟ້ອງຕໍ່ສານ: ຖ້າທ່ານບໍ່ພໍໃຈກັບຜົນຂອງການແກ້ໄຂຜ່ານກົນໄກທາງດ້ານບໍລິຫານ ທ່ານສາມາດຍື່ນ ຄໍາຮ້ອງຟ້ອງຕໍ່ສານປະຊາຊົນນະຄອນຫຼວງວຽງຈັນ ຫຼື ສານປະຊາຊົນແຂວງ. ຄໍາຮ້ອງທຸກຕ້ອງໄດ້ຮັບການແກ້ໄຂ ແລະ ຕ້ອງໄດ້ດໍາເນີນການຕັດສິນພາຍໃນ 9 ເດືອນ. ຖ້າຄໍາຕັດສິນຂອງສານປະຊາຊົນນະຄອນຫຼວງວຽງຈັນ ຫຼື ແຂວງບໍ່ເປັນທີ່ພໍໃຈ, ທ່ານກໍ່ສາມາດຍື່ນຄໍາຮ້ອງຟ້ອງຕໍ່ສານປະຊາຊົນປະຈໍາພາກ (ພິຈາລະນາພາຍໃນ 4 ເດືອນ) ແລະ ຫຼັງຈາກນັ້ນສົ່ງຕໍ່ໃຫ້ສານປະຊາຊົນສູງສຸດ (ພິຈາລະນາພາຍໃນ 3 ເດືອນ). ບໍລິສັດກໍ່ມີສິດເທົ່າທຽມກັນ ໃນການຍື່ນຄໍາຮ້ອງທຸກ ຂຶ້ນຫາລະດັບທີ່ສູງກວ່າ ຖ້າຫາກບໍ່ພໍໃຈກັບຜົນການຕັດສິນ.

ການຍື່ນຄໍາຮ້ອງທຸກຕໍ່ສານປະຊາຊົນ ໝາຍເຖິງທ່ານກໍາລັງເຂົ້າໄປໃນກົນໄກທາງດ້ານຕຸລາການ. ເຊິ່ງໃນນີ້, ຂໍ້ຂັດແຍ່ງຈະຖືກແກ້ໄຂໂດຍຜ່ານຂະບວນການດໍາເນີນຄະດີຢ່າງເປັນທາງການ (ການດໍາເນີນຄະດີຂອງສານປະຊາຊົນ). ເຊິ່ງປະກອບມີການສືບສວນສອບສວນ, ການດໍາເນີນຄະດີ ແລະ ການຕັດສິນຄະດີ. ການແກ້ໄຂຜ່ານຂະບວນການນີ້ແມ່ນຂ້ອນຂ້າງສັບສົນ ໂດຍຂຶ້ນຢູ່ກັບປະເພດ, ຜົນກະທົບ ແລະ ສາເຫດຂອງຂໍ້ຂັດແຍ່ງທີ່ໄດ້ກໍານົດໄວ້ໃນກົດໝາຍທາງແພ່ງ ແລະ ກົດໝາຍອາຍາ.

ການຍື່ນຄໍາຮ້ອງຕໍ່ສະພາປະຊາຊົນຂັ້ນແຂວງ/ສະພາປະຊາຊົນນະຄອນຫຼວງວຽງຈັນ: ທ່ານຍັງສາມາດເລືອກທີ່ຈະຍື່ນຄໍາຮ້ອງຟ້ອງຕໍ່ສະພາແຫ່ງຊາດ (ກົນໄກທາງດ້ານນິຕິບັນຍັດ) ໄດ້ ຖ້າທ່ານບໍ່ພໍໃຈກັບຜົນການແກ້ໄຂ ຜ່ານຂະບວນການດ້ານບໍ ລິຫານ ຫຼື ຕຸລາການ (ຂະບວນການຍຸຕິທໍາ).

ຖ້າທ່ານຄິດວ່າ ການຕົກລົງ/ຄໍາພິພາກສາ ຂອງອົງການປົກຄອງຂັ້ນເມືອງ ຫຼື ແຂວງບໍ່ຍຸຕິທໍາ ຫຼື ຜິດຕໍ່ກົດໝາຍ, ທ່ານສາມາດຍື່ນຄໍາຮ້ອງຟ້ອງເພື່ອຂໍຄວາມເປັນທໍາຕໍ່ ສພຊຂ. ພາຍຫຼັງທີ່ຍື່ນຄໍາຮ້ອງທຸກແລ້ວ, ສພຊຂ ຈະມອບໃຫ້ຄະນະກໍາມະການທີ່ກ່ຽວຂ້ອງ ເຊັ່ນ: ກໍາມາທິການຍຸຕິທໍາ, ກະມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ອື່ນໆ ເພື່ອກວດກາ ແລະ ກວດສອບ ແລະ ລາຍງານໃຫ້ ປະທານ ສພຊຂ ເພື່ອພິຈາລະນາແກ້ໄຂພາຍໃນ 30 ວັນ. ຫຼັງຈາກນັ້ນ, ຄະນະກໍາມະການທີ່ກ່ຽວຂ້ອງ ຈະແຈ້ງ ໃຫ້ຜູ້ຍື່ນຄໍາຮ້ອງທຸກ ແລະ ຜູ້ທີ່ກ່ຽວຂ້ອງອື່ນໆ ຢ່າງເປັນທາງການ ກ່ຽວກັບ ຜົນຂອງການສືບສວນ ແລະ ການຕົກລົງ ຂອງ ສພຊຂ. ຫຼັງຈາກນັ້ນ ຂະແໜງການທີ່ກ່ຽວຂ້ອງ ຂອງລັດ ທີ່ກ່ຽວຂ້ອງເພື່ອດໍາເນີນການພາຍໃນ 30 ວັນ. ຂະແໜງການຂອງລັດທີ່ກ່ຽວຂ້ອງຈະຕ້ອງໄດ້ລາຍງານການຈັດຕັ້ງປະຕິບັດຕາມຄໍາຕັດສິນ ຂອງ ສພຊຂ ໃຫ້ຄືນກັບ ສະພາປະຊາຊົນແຂວງ ພາຍໃນ 45 ມື້.

ການຍື່ນຄໍາຮ້ອງຕໍ່ສະພາແຫ່ງຊາດ: ຖ້າຄະດີຂອງທ່ານບໍ່ສາມາດແກ້ໄຂໄດ້ໂດຍອົງການຈັດຕັງຂອງລັດຜ່ານທັງສາມຊ່ອງທາງ (ກົນໄກທາງດ້ານບໍລິຫານ), ສານປະຊາຊົນພາກ ຫຼື (ກົນໄກທາງຕຸລາການ) ຫຼື ສານປະຊາຊົນແຂວງ (ກົນໄກທາງດ້ານນິຕິບັນຍັດ), ທ່ານກໍ່ສາມາດຍື່ນຄໍາຮ້ອງຟ້ອງ ຕໍ່ສະພາແຫ່ງຊາດໄດ້. ຖ້າຫາກຍື່ນຄໍາຮ້ອງຟ້ອງແລ້ວ, ສະພາແຫ່ງຊາດຕ້ອງມອບໝາຍໃຫ້ຄະນະກໍາມະ ທົບທວນ, ກວດກາຄືນ ແລະ ລາຍງານຕໍ່ປະທານສະພາແຫ່ງຊາດ ເພື່ອພິຈາລະນາພາຍໃນ 30 ວັນ. ຫຼັງຈາກນັ້ນ ຄະນະກໍາມະການດັ່ງກ່າວຕ້ອງສົ່ງແຈ້ງການທີ່ເປັນທາງການ ກ່ຽວກັບ ຜົນການສືບສວນ ແລະ ການຕົກລົງຂອງສະພາແຫ່ງຊາດ ໃຫ້ຜູ້ຍື່ນຄໍາຮ້ອງທຸກ ແລະ ບັນດາພາກສ່ວນກ່ຽວຂ້ອງຮັບຊາບ. ນອກຈາກນີ້, ແຈ້ງການດັ່ງກ່າວ ຈະຖືກສົ່ງໄປຫາອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ເພື່ອດໍາເນີນການຈັດຕັ້ງປະຕິບັດຕາມຄໍາຕົກລົງດັ່ງກ່າວ ພາຍໃນເວລາ 30 ວັນ. ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ຕ້ອງໄດ້ລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດຕາມການຕົກລົງ ຂອງສະພາແຫ່ງຊາດ ຄືນໃຫ້ສະພາແຫ່ງຊາດ ພາຍໃນ 45 ວັນ.

ນອກຈາກນີ້, ທ່ານຍັງສາມາດຍື່ນຄໍາຮ້ອງທຸກ ຂອງທ່ານຕໍ່ສະພາແຫ່ງຊາດໂດຍກົງ ຜ່ານເບີສາຍດ່ວນໃນໄລຍະການດໍາເນີນກອງປະຊຸມສະໄໝສາມັນທີ່ຈັດຂຶ້ນສອງຄັ້ງຕໍ່ປີ.

| ເບີສາຍດ່ວນ! | ຈະນໍາໃຊ້ ເບີສາຍດ່ວນໄດ້ແນວໃດແດ່? |
| --- | --- |
| ສາຍດ່ວນສະພາແຫ່ງຊາດ : ໂທ 156<br>ສາຍດ່ວນລັດຖະບານ : ໂທ 1516 | 1. ໂທສາຍດ່ວນ<br>2. ຂໍຄໍາແນະນໍາຈາກຫ້ອງການຍຸຕິທໍາ<br>3. ຂໍຄວາມຊ່ວຍເຫຼືອທາງດ້ານກົດໝາຍ |

## ຜົນທີ່ທ່ານຈະໄດ້ຮັບ ມີຫຍັງແດ່?

ຕ້ອງໄດ້ເຂົ້າໃຈວ່າ ການນຳໃຊ້ກົນໄກການຮ້ອງທຸກເຫຼົ່ານີ້ ບໍ່ແມ່ນທຸກກໍລະນີ ທີ່ຈະນຳໃຊ້ໄດ້ຮັບຜົນຢ່າງມີປະສິດທິຜົນໝົດ.

ຜົນຂອງການແກ້ໄຂຂໍ້ຂັດແຍ່ງ ຜ່ານຂະບວນການທາງດ້ານບໍລິຫານ ແລະ ການຕົກລົງ ຂອງຂະບວນການທາງດ້ານບໍ ລິຫານ ຕົວຢ່າງ: ອົງການບໍລິຫານ ຫຼື ລັດຖະບານ ບໍ່ໄດ້ມີຂໍ້ຜູກມັດທາງດ້ານກົດໝາຍ. ນັ້ນໝາຍຄວາມວ່າ ບໍລິສັດອາດບໍ່ໃຫ້ຄວາມຮ່ວມມື ແລະ ບໍ່ຮັບເອົາ ການຕົກລົງດັ່ງກ່າວ ຖ້າຫາກການຕັດສິນນັ້ນ ບໍ່ເປັນທີ່ພໍໃຈ ສຳລັບບໍລິສັດ.

ເຖິງແນວໃດກໍຕາມ, ກົນໄກທາງດ້ານຕຸລາການ ຈະນຳພາໄປສູ່ຂະບວນການທີ່ມີຜົນບັງຄັບໃຊ້ຕາມກົດໝາຍ. ນັ້ນກໍ່ໝາຍຄວາມວ່າ ທຸກຝ່າຍທີ່ມີຂໍ້ຂັດແຍ່ງ ຕ້ອງໄດ້ປະຕິບັດຕາມການຕັດສິນ ທາງດ້ານກົດໝາຍ. ດັ່ງນັ້ນ, ການຍື່ນຄຳຮ້ອງທຸກໄປຫາຂັ້ນທີ່ສູງກວ່າ ຈະມີຄວາມສຳຄັນຫຼາຍ ຖ້າທ່ານຄິດວ່າການຕັດສິນຂອງສານປະຊາຊົນ ຫາກບໍ່ສອດຄ່ອງກັບລະບຽບກົດ ໝາຍ.

ສຸດທ້າຍ, ການຕົກລົງ ຂອງ ສພຊຊ ຫຼື ສະພາແຫ່ງຊາດ ມັກຈະບໍ່ໄດ້ຮັບການບັງຄັບໃຊ້ ແລະ ປະຕິບັດຢ່າງມີປະສິດທິຜົນ ໂດຍອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ສະເໝີໄປໝົດ.

## ທ່ານຈະມີຄວາມສ່ຽງບໍ ຈາກການຍື່ນຄຳຮ້ອງທຸກໄປຫາ ກົນໄກການແກ້ໄຂຄຳຮ້ອງທຸກຂອງລັດຖະບານ?

ຄວາມສ່ຽງທີ່ເຫັນໄດ້ຊັດເຈນແມ່ນ ຕ້ອງໃຊ້ເວລາຫຼາຍ (ແລະ ຖ້າຫາກຄະດີຖືກດຳເນີນໂດຍສານປະຊາຊົນ ແມ່ນຈະໄດ້ເສຍຄ່າໃຊ້ຈ່າຍ) ໂດຍທີ່ຍັງບໍ່ທັນໄດ້ຮັບຜົນຈາກການຕັດສິນ ຫຼື ຈະມີຜົນບັງຄັບໃຊ້. ອົງການຈັດຕັ້ງ ແລະ ຜູ້ດຳເນີນການທີ່ກ່ຽວຂ້ອງກັບກົນໄກທາງດ້ານບໍລິຫານ ອາດຈະມີຄວາມລຳອຽງ ຖ້າຫາກເຂົາເຈົ້າໄດ້ມີສ່ວນຮ່ວມໃນການອະນຸມັດການລົງທຶນດັ່ງກ່າວ. ເຊິ່ງອາດຈະເຮັດໃຫ້ທ່ານຕົກຢູ່ໃນຄວາມສ່ຽງ ແລະ ການດຳເນີນອາດມີລັກສະນະຕໍ່ຕ້ານກັບ ຄຳຮ້ອງທຸກຂອງທ່ານ. ຂັ້ນຕອນຂະບວນການດຳເນີນ ຂອງສານປະຊາຊົນແມ່ນມີຄວາມຫຍຸ້ງຍາກຫຼາຍ ແລະ ທ່ານຈະຕ້ອງໄດ້ເສຍຄ່າໃຊ້ຈ່າຍໃນການຈ້າງທະນາຍຄວາມ ແລະ ເສຍຄ່າທຳນຽມຕ່າງໆ. ເນື່ອງຈາກວ່າບໍ່ມີລະບຽບການທີ່ລະບຸຊັດເຈນວ່າ ກໍລະນີໃດ ການອຸທອນ ຈຶ່ງສາມາດຖືກພິຈາລະນາ ເພື່ອຍື່ນຕໍ່ຂັ້ນຕໍ່ໄປໄດ້, ເຊິ່ງມັນກໍ່ອາດຈະມີຄວາມເປັນໄປໄດ້ ທີ່ບັນຫາຂໍ້ຂັດແຍ່ງຂອງທ່ານຈະຖືກຕັດ ສິນດ້ວຍຄວາມຍຸຕິທຳ ແລະ ສອດຄ່ອງຕາມກົດໝາຍ ພາຍຫຼັງທີ່ໃຊ້ເວລາດົນ ແລະ ມີຄ່າໃຊ້ຈ່າຍຫຼາຍ, ແຕ່ບໍລິສັດອາດຈະຍື່ນຂໍອຸທອນໃນຂັ້ນທີ່ສູງກວ່າຕໍ່ໄປ ແລະ ເຮັດແບບນີ້ຕໍ່ໄປເລື່ອຍໆ ຈົນກວ່າທ່ານຈະໝົດເງິນ. ສຳລັບກົນໄກທາງດ້ານນິຕິບັນຍັດ ມີຂັ້ນຕອນການດຳເນີນຍັງບໍ່ທັນຊັດເຈນ. ສະນັ້ນ, ໃນປັດຈຸບັນຈຶ່ງເປັນທາງເລືອກ ທາງດ້ານທິດສະດີ ແລະ ບໍ່ທັນມີການຈັດຕັ້ງປະຕິບັດ. ເຖິງເຖິງແນວໃດກໍ່ຕາມ, ທ່ານກໍ່ຍັງສາມາດຂໍຄວາມຊ່ວຍເຫຼືອຈາກ ອົງການຈັດຕັ້ງທາງສັງຄົມ ແລະ ນັກກົດໝາຍປະຈຳຊຸມຊົນ ຖ້າຫາກທ່ານບໍ່ໄດ້ຮັບຄວາມເປັນທຳ ບໍ່ວ່າຈະເປັນລັກສະນະໃດກໍ່ຕາມ.

ອົງການຈັດຕັ້ງທາງສັງຄົມສ່ວນໃຫຍ່ ເຮັດວຽກຢູ່ບັນດາເມືອງຈຳນວນໜ້ອຍໜຶ່ງເທົ່ານັ້ນ. ຕົວຢ່າງ ເຊັ່ນ:

- ສະພາທະນາຍຄວາມ (LBA) ມີຢູ່ທຸກແຂວງຂອງລາວ ໃຫ້ການຊ່ວຍເຫຼືອ ແລະ ໃຫ້ຄຳປຶກທາງດ້ານກົດໝາຍ ໂດຍບໍ່ເສຍຄ່າໃຊ້ຈ່າຍ ແລະ ໃຫ້ການຊ່ວຍເຫຼືອ ໃນການເຂົ້າເຖິງຂະບວນຍຸຕິທຳ ສຳລັບກຸ່ມຄົນທີ່ມີຄວາມສ່ຽງ, ຜູ້ດ້ອຍໂອກາດ ແລະ ຜູ້ທຸກຍາກຢູ່ໃນເຂດຊົນນະບົດ (ສຳນັກງານຕັ້ງຢູ່: ຕຶກສານປະຊາຊົນນະຄອນຫຼວງວຽງຈັນ ຊັ້ນ 4, ຖະໜົນ ຫຼັກ 3 ທ່າເດື່ອ, ເມືອງ ສີສັດຕະນາກ, ຕູ້ໄປສະນີ: 11087 ນະຄອນຫຼວງວຽງຈັນ ສປປ ລາວ. ໂທ: (856)-(021)-990 445, ແຟັກ: (856)-(021)-990 446).
- ອົງການບ້ານຈຸດສຸມສາກົນ (VFI) ເປັນອົງການທີ່ໃຫ້ການຊ່ວຍເຫຼືອໃນການຝຶກອົບຮົມທາງດ້ານກົດໝາຍ ໃຫ້ແກ່ຊົນເຜົ່າ ແລະ ກຸ່ມຄົນທີ່ດ້ອຍໂອກາດ ຢູ່ເມືອງ ຕາໂອ້ຍ ແລະ ເມືອງ ເລົ່າງາມ, ແຂວງ ສາລະວັນ (ສຳນັກງານຕັ້ງຢູ່: ບ້ານ ໂພນສະຫວັນໃຕ້, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂທລະສັບ: +85621 312519, https://villagefocus.org/).
- ອົງການ Mennonite Central Committee (MCC) ໃຫ້ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ສຶກສາທາງດ້ານກົດໝາຍຢູ່ເມືອງ ທ່າໂທມ, ແຂວງ ໄຊສົມບູນ ແລະ ແຂວງ ຊຽງຂວາງ (ສຳນັກງານຕັ້ງຢູ່: ບ້ານເລກທີ 177, ບ້ານໂພນສະຫວັນໃຕ້, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂທລະສັບ: 021 312901).
- ອົງການ Helvetas ໄດ້ໃຫ້ການສະໜັບສະໜູນ ການປູກຈິດສຳນຶກ ແລະ ໃຫ້ຄຳປຶກສາໃຫ້ແກ່ຜູ້ອຳນວຍຄວາມສະດວກຂັ້ນບ້ານ ແລະ ອາສາສະໝັກກົດໝາຍ ທີ່ເຂົາເຈົ້າສາມາດຊ່ວຍເຫຼືອຜູ້ດ້ອຍໂອກາດ ແລະ ຜູ້ທຸກຍາກ ກ່ຽວກັບການແກ້ໄຂບັນຫາດ້ານທີ່ດິນ ແລະ ຊັບພະຍາກອນທຳມະຊາດ (ຕູ້ໄປສະນີ 6367, ບ້ານເລກທີ 143, ບ້ານ ໂພນທັນເໜືອ, ໜ່ວຍ 15, ຖະໜົນໂພນທັນ 01000, ນະຄອນຫຼວງວຽງຈັນ, ໂທລະສັບ: 021 263189, https://www.

helvetas.org/en/laos).

- ສະມາຄົມພັດທະນາແມ່ຍິງ ແລະ ການສຶກສາທາງດ້ານກົດໝາຍ (ADWLE) ໄດ້ຈັດຝຶກອົບຮົມກ່ຽວກັບກົດໝາຍທີ່ເນັ້ນໃສ່ສິດທິຂອງແມ່ຍິງ ໃຫ້ແກ່ອຳນາດການປົກຄອງບ້ານ ແລະ ໜ່ວຍໄກ່ເກ່ຍຂັ້ນບ້ານ ຢູ່ໃນ 18 ແຂວງທົ່ວປະ ເທດ. ສຳນັກງານຕັ້ງຢູ່: ບ້ານ ໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທ: 021 262696-97, ເວບໄຊທ໌: www.adwlelaos.org, ເຟດບຸກ: facebook.com/adwle
- ມູນນິທິເອເຊຍ ໄດ້ສະໜັບສະໜູນການເຂົ້າເຖິງຂະບວນຍຸຕິທຳ ໂດຍຈັດຕັ້ງປະຕິບັດຜ່ານ ໂຄງການຊ່ວຍເຫຼືອທາງດ້ານກົດໝາຍ ໃຫ້ແກ່ພົນລະເມືອງທຸກຄົນ ແລະ ສົ່ງເສີມສິດທິ ແລະ ໂອກາດຂອງແມ່ຍິງ (ສຳນັກງານຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 8032 https://asiafoundation.org/where-we-work/laos/)
- ສູນອາສາສະໝັກສາກົນຂອງຍີ່ປຸ່ນ (JVC) ກຳລັງດຳເນີນງານຢູ່ແຂວງ ເຊກອງ ເພື່ອສະໜອງການຈັດຝຶກອົບຮົມດ້ານກົດໝາຍ ກ່ຽວກັບ ສິດທິຂອງປະຊາຊົນທ້ອງຖິ່ນ ກ່ຽວກັບ ຊັບພະຍາກອນທຳມະຊາດ (https://www.ngo-jvc.com/en/ourprojects/activities-in-laos/)
- BEBSEACLES ໄດ້ຈັດຕັ້ງປະຕິບັດການສຶກສາກົດໝາຍຊຸມຊົນ ແລະ ຄລີນິກກົດໝາຍ (ສຳນັກງານຕັ້ງຢູ່: ເຮືອນເລກທີ 150/1, ຖະໜົນ 4B, ໜ່ວຍ 9, ບ້ານ ຜາໄຊ, ເມືອງ ສີສັດຕະນາກ, ຕູ້ໄປສະນີ: 01160, ນະຄອນຫຼວງວຽງຈັນ, ສປປ ລາວ, https://www.babseacle.org/laos/)

### ທ່ານຈະເສຍຄ່າໃຊ້ຈ່າຍຫຼາຍປານໃດ?

ການຮ້ອງທຸກຕໍ່ອຳນາດການປົກຄອງບ້ານ, ເມືອງ ຫຼື ແຂວງ ຫຼື ກະຊວງ ຕ້ອງໄດ້ເສຍຄ່າໃຊ້ຈ່າຍປະມານ 200.000 ກີບ ຕໍ່ໜຶ່ງຂໍ້ຂັດແຍ່ງ ໃຫ້ກັບໜ່ວຍໄກ່ເກ່ຍຂັ້ນບ້ານ. ຜູ້ຮ້ອງຟ້ອງຕ້ອງຈ່າຍເງິນຢ່າງໜ້ອຍ 200.000 ກີບຕໍ່ຂໍ້ຂັດແຍ່ງ ເພື່ອການແກ້ໄຂຂໍ້ຂັດແຍ່ງ ຢູ່ຂັ້ນເມືອງ, ແຂວງ ຫຼື ຂັ້ນສູນກາງ. ຄ່າທຳນຽມຈະເພີ່ມຂຶ້ນໂດຍຂຶ້ນກັບມູນຄ່າຄວາມເສຍຫາຍທີ່ເກີດຂຶ້ນຈາກຂໍ້ຂັດແຍ້ງ. ນອກຈາກນັ້ນ, ຜູ້ຮ້ອງທຸກຍັງຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຂອງຕົນເອງໃນການເດີນທາງໄປ ເທດສະບານ ເມືອງ ຫຼື ແຂວງ ຫຼື ໄປກະຊວງ ຢູ່ນະຄອນຫຼວງວຽງຈັນ. ການຍື່ນຄຳຮ້ອງຟ້ອງ ຕໍ່ສານປະຊາຊົນ ແມ່ນຈະເສຍຄ່າໃຊ້ຈ່າຍທີ່ຂ້ອນຂ້າງສູງ ເປັນຕົ້ນແມ່ນການຈ້າງທະນາຍຄວາມ, ຄ່າເດີນທາງ, ຄ່າທຳນຽມ ແລະ ອື່ນໆ. ພ້ອມດຽວກັນ, ການຍື່ນຄຳຮ້ອງຕໍ່ສະພາ ແມ່ນຍິ່ງຕ້ອງໃຊ້ເວລາຫຼາຍ ແລະ ມີຄວາມຕ້ອງການການຊ່ວຍເຫຼືອຈາກພາຍນອກ, ເຊິ່ງແນ່ນອນວ່າມັນຈະຕ້ອງມີຄ່າໃຊ້ຈ່າຍເຊັ່ນກັນ.

## 4. ການຍື່ນຄຳຮ້ອງຟ້ອງ ຕໍ່ໜ່ວຍໄກ່ເກ່ຍຂັ້ນບ້ານ

ຖ້າເກີດມີຂໍ້ຂັດແຍ່ງເລັກໆນ້ອຍໆ ກ່ຽວກັບ ສິດການນຳໃຊ້ທີ່ດິນ ຫຼື ມີບັນຫາດ້ານສິ່ງແວດລ້ອມທີ່ບໍ່ຮຸນແຮງ ທີ່ສ້າງຄວາມເສຍຫາຍດ້ານການເງິນບໍ່ຫຼາຍ, ທ່ານກໍ່ສາມາດຍື່ນຄຳຮ້ອງທຸກຕໍ່ໜ່ວຍໄກ່ເກ່ຍຂັ້ນບ້ານ ທີ່ຢູ່ໃນບ້ານຂອງທ່ານ ຫຼື ຢູ່ບ້ານທີ່ຂໍ້ຂັດແຍ່ງເກີດຂຶ້ນ.

### ໜ່ວຍໄກ່ເກ່ຍຂັ້ນບ້ານ ແມ່ນຫຍັງ?

ແຕ່ລະບ້ານຢູ່ໃນ ສປປ ລາວ ໄດ້ມີການສ້າງຕັ້ງ ໜ່ວຍໄກ່ເກ່ຍຂັ້ນບ້ານຂອງຕົນເອງ ເພື່ອເຮັດໃຫ້ສາມາດແກ້ໄຂຂໍ້ຂັດແຍ່ງເລັກນ້ອຍຢູ່ບ້ານໂດຍກົງໄດ້. ທັງນີ້ກໍ່ເພື່ອຮັດແໜ້ນຄວາມສາມັກຄີພາຍໃນບ້ານ ແລະ ສ້າງຄວາມສະຫງົບສຸກ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳ ຢູ່ໃນສັງຄົມ.

ດັ່ງນັ້ນ, ໜ່ວຍໄກ່ເກ່ຍຂັ້ນບ້ານ ຈຶ່ງມີໜ້າທີ່ໃນການໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນຢູ່ໃນລະດັບບ້ານ. ໜ່ວຍນີ້ຈະໃຫ້ການຊ່ວຍເຫຼືອໃນການແກ້ໄຂຂໍ້ຂັດແຍ່ງ ໂດຍການສຶກສາອົບຮົມ, ຊ່ວຍເຫຼືອ ແລະ ແນະນຳຄູ່ກໍລະນີ ເພື່ອໃຫ້ປະນີປະນອມກັນ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງ ຮ່ວມກັນຢ່າງສັນຕິວິທີ.




*ຮູບສະແດງ 16: ໜ່ວຍໄກ່ເກ່ຍຂັ້ນບ້ານ ກໍາລັງດໍາເນີນການໄກ່ເກ່ຍຂໍ້ຂັດແຍ່ງ ລະຫວ່າງ ຊາວບ້ານ ແລະ ບໍລິສັດ*

ໜ່ວຍໄກ່ເກ່ຍຂັ້ນບ້ານລວມມີ 5 ທ່ານ: ປະທານໄກ່ເກ່ຍ 1 ທ່ານ, ຮອງປະທານ 1 ທ່ານ ແລະ ສະມາຊິກ 3 ທ່ານ. ຖ້າກໍລະນີເຫັນວ່າມີຄວາມຈໍາເປັນ, ກໍ່ອາດຈະຕ້ອງມີຜູ້ຊ່ວຍ ເພື່ອດໍາເນີນການແກ້ໄຂຂໍ້ຂັດແຍ່ງ. ໜ່ວຍໄກ່ເກ່ຍຂັ້ນບ້ານ ແມ່ນຢູ່ພາຍໃຕ້ການຊີ້ນໍາ, ກວດກາ ແລະ ໃຫ້ຄໍາແນະນໍາດ້ານວິຊາການ ຂອງຫ້ອງການຍຸຕິທໍາເມືອງ.

## ທ່ານສາມາດຍື່ນຄໍາຮ້ອງທຸກ ຕໍ່ໜ່ວຍໄກ່ເກ່ຍຂັ້ນບ້ານ ໄດ້ໃນກໍລະນີໃດ?

ໜ່ວຍໄກ່ເກ່ຍຂັ້ນບ້ານ ແມ່ນມີໜ້າທີ່ຮັບຜິດຊອບ ໃນການແກ້ໄຂຂໍ້ຂັດແຍ່ງຂະໜາດນ້ອຍຢູ່ໃນລະດັບບ້ານ. ສະນັ້ນ, ຖ້າບຸກຄົນ ຫຼື ຄອບຄົວ ຫຼື ກຸ່ມຂະໜາດນ້ອຍ ຫາກມີຂໍ້ຂັດແຍ່ງເລັກນ້ອຍກັບບໍລິສັດ, ເຂົາເຈົ້າສາມາດເຂົ້າຫາໜ່ວຍໄກ່ເກ່ຍຂັ້ນບ້ານ ເພື່ອຮ້ອງຂໍການໄກ່ເກ່ຍຂໍ້ຂັດແຍ່ງໄດ້. ເຖິງແນວໃດກໍ່ຕາມ, ການແກ້ໄຂຂໍ້ຂັດແຍ່ງອາດຈະມີແນວໂນ້ມໄດ້ຮັບຜົນດີ ຖ້າຫາກເປັນບໍລິສັດຂະໜາດນ້ອຍ ແລະ ຕັ້ງຢູ່ທ້ອງຖິ່ນ ຫຼື ຖ້າເປັນບໍລິສັດຂະໜາດໃຫຍ່ ກໍ່ຈະຕ້ອງມີຜູ້ປະສານງານຢູ່ພາຍໃນທ້ອງຖິ່ນດັ່ງກ່າວ. ອາດຈະເປັນຂໍ້ຂັດແຍ່ງທົ່ວໄປ ເຊັ່ນ: ການບຸກເບີກພື້ນທີ່ເກີນຂອບເຂດທີ່ໄດ້ຕົກລົງກັນ ລະຫວ່າງ ທີ່ດິນຂອງບໍລິສັດ ແລະ ທີ່ດິນ ຫຼື ປ່າໄມ້ຂອງຊາວບ້ານ ຫຼືການກີດກັ້ນເສັ້ນທາງໄປມາຢ່າງຖາວອນຂອງບໍລິສັດ ເຊິ່ງທຸກຄົນຢູ່ໃນສັງຄົມນໍາໃຊ້.



*ຮູບສະແດງ 17: ນັກລົງທຶນ ບຸກລຸກທີ່ດິນນາ ຂອງປະຊາຊົນ*

## ທ່ານຈະຍື່ນຄຳຮ້ອງທຸກໄດ້ແນວໃດ?

ທ່ານຈຳເປັນຕ້ອງຍື່ນຄຳຮ້ອງທຸກຂອງທ່ານ ຕໍ່ໜ່ວຍໄກ່ເກ່ຍຂັ້ນບ້ານ ທີ່ຢູ່ໃນບ້ານຂອງທ່ານ ຫຼື ຢູ່ໃນບ້ານທີ່ມີການຂໍ້ຂັດແຍ່ງນັ້ນເກີດຂຶ້ນ. ທ່ານສາມາດຍື່ນຄຳຮ້ອງ ເປັນລາຍລັກອັກສອນ ຫຼື ແບບປາກເປົ່າ. ຖ້າທ່ານຍື່ນຄຳຮ້ອງທຸກຂອງທ່ານແບບປາກເປົ່າ ຕໍ່ຄະນະກຳມະການໄກ່ເກ່ຍຂັ້ນບ້ານ, ໜ່ວຍດັ່ງກ່າວ ຈະຈົດບັນທຶກແລະອ່ານຜ່ານໃຫ້ທ່ານຟັງ. ຖ້າທ່ານເຫັນວ່າຂໍ້ມູນຖືກຕ້ອງ ກັບສິ່ງທີ່ທ່ານສະເໜີ ທ່ານຈະໄດ້ເຊັນບົດບັນທຶກ ຫຼື ຈ້ຳໂປ້ໃສ່ ເພື່ອເປັນຫຼັກຖານ.




*ຮູບສະແດງ 18: ຊາວບ້ານລາຍງານບັນຫາ ທີ່ເກີດຈາກກິດຈະກຳການລົງທຶນ ຕໍ່ນາຍບ້ານ ແລະ ຜູ້ຮັບຜິດຊອບເກັບກຳຂໍ້ມູນລາຍນິ້ວມືໄວ້ເພື່ອເປັນຫຼັກຖານ*

## ຈະເກີດຫຍັງຂຶ້ນ ພາຍຫຼັງທີ່ທ່ານໄດ້ຍື່ນຄຳຮ້ອງທຸກ?

ການຮັບເອົາຄຳຮ້ອງທຸກທຸກ ແລະ ການຮ້ອງຂໍຄວາມກະຈ່າງແຈ້ງ: ໜ່ວຍໄກ່ເກ່ຍຂັ້ນບ້ານ ຮັບເອົາຄຳຮ້ອງທຸກ ແລະ ບັນທຶກໄວ້. ຫຼັງຈາກນັ້ນ, ໜ່ວຍໄກ່ເກ່ຍຈະແຈ້ງໃຫ້ພາກສ່ວນຕ່າງໆພາຍໃນ 3 ມື້ ເພື່ອໃຫ້ພວກເຂົາໃຫ້ຄຳອະທິບາຍ (ເພີ່ມເຕີມ) ແລະ/ຫຼື ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບ ບັນຫາ. ບັນຫາຈະຖືກສົ່ງໃຫ້ໜ່ວຍໄກ່ເກ່ຍຂັ້ນບ້ານ ພາຍໃນ 4 ມື້ ນັບຈາກໄດ້ຮັບການແຈ້ງການ.

ການກວດສອບຄຳຮ້ອງທຸກ ແລະ ການເຊີນຄູ່ກໍລະນີ: ໜ່ວຍໄກ່ເກ່ຍຂັ້ນບ້ານ ຈະກວດກາຄຳຮ້ອງທຸກ ຂອງຄູ່ກໍລະນີພາຍໃນ 3 ວັນ ເພື່ອໃຫ້ມີຄວາມເຂົ້າໃຈ ກ່ຽວກັບ ຂໍ້ຂັດແຍ່ງທີ່ເກີດຂຶ້ນ ແລະ ດຳເນີນການໄກ່ເກ່ຍ. ຖ້າເຫັນວ່າມີຄວາມຈຳເປັນ, ຈະຕ້ອງໄດ້ລາຍງານຂໍ້ຂັດແຍ່ງດັ່ງກ່າວໃຫ້ນາຍບ້ານເພື່ອຮັບຊາບ ເພື່ອແນະນຳ ຫຼື ຕິດຕໍ່ຫາຫ້ອງການຍຸຕິທຳເມືອງ ຫຼື ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ເພື່ອປະກອບສຳນວນດ້ານວິຊາການ. ຫຼັງຈາກກວດກາແລ້ວ, ໜ່ວຍໄກ່ເກ່ຍຂັ້ນບ້ານຈະຕ້ອງໄດ້ອອກຈົດໝາຍເຊີນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມການໄກ່ເກ່ຍ. ຈົດໝາຍເຊີນຕ້ອງໄດ້ລະບຸລະອຽດຈະແຈ້ງ ເພື່ອແຈ້ງພາກສ່ວນກ່ຽວຂ້ອງເຂົ້າໃຈກ່ຽວກັບ ເນື້ອໃນ, ວັນທີ ແລະ ສະຖານທີ່ດຳເນີນການໄກ່ເກ່ຍ. ທຸກຝ່າຍທີ່ມີສ່ວນກ່ຽວຂ້ອງ ຈະຕ້ອງເຂົ້າຮ່ວມໃນຂະບວນການໄກ່ເກ່ຍ.

ຂັ້ນຕອນການໄກ່ເກ່ຍ: ການດຳເນີນການໄກ່ເກ່ຍ ຈະຕ້ອງປະຕິບັດຕາມລຳດັບຂັ້ນຕອນ. ການໄກ່ເກ່ຍເລີ່ມຕົ້ນຈາກການໃຫ້ຂໍ້ມູນ ກ່ຽວກັບ ຂະບວນການໄກ່ເກ່ຍ ເຊັ່ນ: ຄວາມສຳຄັນ ແລະ ຜົນປະໂຫຍດຂອງການໄກ່ເກ່ຍ, ກົດລະບຽບການໄກ່ເກ່ຍ, ພາລະບົດບາດ ແລະ ໜ້າທີ່ຂອງຜູ້ໄກ່ເກ່ຍ ລວມທັງສິດ ແລະ ໜ້າທີ່ຂອງຄູ່ກໍລະນີ, ບຸກຄົນທີສາມ ແລະ ຜູ້ເຂົ້າຮ່ວມ ອື່ນໆ (ເບິ່ງຕາຕະລາງຂ້າງລຸ່ມນີ້). ສິ່ງສຳຄັນແມ່ນຈະຕ້ອງທຳຄວາມເຂົ້າໃຈ ກ່ຽວກັບ ສະພາບຄວາມເປັນຈິງ ທີ່ວ່າ ທ່ານມີສິດທີ່ຈະປະຕິເສດ ຜູ້ໄກ່ເກ່ຍ, ຖ້າຫາກທ່ານມີເຫດຜົນທີ່ໜັກແໜ້ນ, ທ່ານ ຫຼື ຄູ່ກໍລະນີອາດຈະຂໍໃຫ້ຜູ້ໄກ່ເກ່ຍຄົນໃດຄົນໜຶ່ງ ຫຼື ຫຼາຍຄົນຖອນຕົວ ກໍ່ໄດ້. ຂັ້ນຕອນທີສອງ, ທ່ານຈະເປັນຜູ້ອະທິບາຍບັນຫາທີ່ທ່ານສະເໜີ ເຊິ່ງຈຳເລີຍ ຫຼື ຝ່າຍກົງກັນຂ້າມຈະຕ້ອງໄດ້ຮັບຟັງ. ຫຼັງຈາກນັ້ນ, ຈຳເລີຍຈະໃຫ້ຄຳເຫັນຂອງລາວ ແລະ ທ່ານກໍ່ຈຳເປັນຕ້ອງຟັງມັນຢ່າງລະມັດລະວັງ ໂດຍບໍ່ໃຫ້ມີການຂັດຂວາງລາວ. ຫຼັງຈາກນັ້ນ, ຜູ້ໄກ່ເກ່ຍຈະຖາມຄວາມຄິດເຫັນຈາກຜູ້ເຂົ້າຮ່ວມ, ບຸກຄົນທີສາມ ແລະ ຜູ້ເຂົ້າຮ່ວມອື່ນໆ. ເມື່ອທຸກຄົນໄດ້ສະເໜີໝົດແລ້ວ, ມາຮອດຂັ້ນຕອນນີ້ແມ່ນຈະຂຶ້ນກັບທ່ານ ແລະ ຜູ້ຕາງໜ້າຂອງບໍລິສັດ ທີ່ຈະຕ້ອງຕົກລົງຮ່ວມກັນຢ່າງສັນຕິວິທີ. ເຊິ່ງຜູ້ໄກ່ເກ່ຍຈະຊ່ວຍທ່ານໃນແຕ່ລະຂັ້ນຕອນ. ເຖິງແນວໃດກໍ່ຕາມ, ຄວນແມ່ນທ່ານ ແລະ ຕາງໜ້າບໍລິ ສັດເປັນຜູ້ຕົກລົງຮ່ວມກັນ. ໃນຕອນທ້າຍ, ບໍ່ວ່າຜົນຂອງການໄກ່ເກ່ຍຈະເປັນແນວໃດ ຫຼື ພວກທ່ານຈະຕົກລົງກັນໄດ້ ຫຼື ບໍ່, ຜູ້ໄກ່ເກ່ຍກໍ່ຈະຕ້ອງໄດ້ຂຽນບົດບັນທຶກເປັນພາສາລາວ ແລະ ອ່ານຜ່ານໃຫ້ພວກທ່ານ ແລະ ຜູ້ເຂົ້າຮ່ວມຄົນອື່ນຟັງ. ຖ້າທ່ານເຫັນດີກັບເນື້ອໃນຂອງບົດບັນທຶກ, ທ່ານຈຳເປັນຕ້ອງໄດ້ລົງລາຍເຊັນ ຫຼື ຢືນຢັນມັນດ້ວຍການຈ້ຳໂປ້.

### ສິດ ແລະ ໜ້າທີ່ຂອງທ່ານ (ແລະ ຂອງຝ່າຍອື່ນໆ) ທີ່ເຂົ້າຮ່ວມໃນການໄກ່ເກ່ຍຂັ້ນບ້ານ

| ສິດ | ໜ້າທີ່ |
|---|---|
| • ຍື່ນຄຳຮ້ອງທຸກ, ອະທິບາຍ ຫຼື ຊີ້ແຈງກ່ຽວກັບຂໍ້ຂັດແຍ່ງ;<br>• ເບິ່ງ, ອ່ານ, ບັນທຶກ ຫຼື ເຮັດສຳເນົາເນື້ອໃນຂອງເອກະສານທີ່ສຳຄັນ ເພື່ອປະກອບສຳນວນຂໍ້ຂັດແຍ່ງ;<br>• ຖາມ ຄຳຖາມ, ເຈລະຈາ ແລະ ຕົກລົງກັນດ້ວຍການປະນີປະນອມກັບຝ່າຍກົງກັນຂ້າມ, ບຸກຄົນອື່ນໆ ທີ່ກ່ຽວ ຂ້ອງກັບຂໍ້ຂັດແຍ່ງ;<br>• ສະເໜີຄຳປະຕິເສດ ຕໍ່ຜູ້ໄກ່ເກ່ຍ ດ້ວຍເຫດ ແລະ ຜົນທີ່ເໝາະສົມ ແລະ ເຊື່ອຖືໄດ້;<br>• ຍອມຮັບ ຫຼື ບໍ່ຍອມຮັບ ກັບຜົນຂອງການໄກ່ເກ່ຍ;<br>• ຮຽກຮ້ອງໃຫ້ບັງຄັບໃຊ້ຜົນຂອງການໄກ່ເກ່ຍ;<br>• ໃຊ້ສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. | • ເຂົ້າຮ່ວມການໄກ່ເກ່ຍຕາມການເຊື້ອເຊີນ ຫຼື ຮຽກຮ້ອງຈາກໜ່ວຍໄກ່ເກ່ຍຂັ້ນບ້ານ;<br>• ສະໜອງຂໍ້ມູນ ແລະ ຫຼັກຖານເພື່ອຢັ້ງຢືນເຫດການທີ່ຝ່າຍຕ່າງໆ ເພື່ອພິຈາລະນາເປັນເອກະສານອ້າງອີງຂອງຂໍ້ສະເໜີ, ໃຫ້ຄຳອະທິບາຍ ຫຼື ຄວາມກະຈ່າງແຈ້ງກ່ຽວກັບຂໍ້ຂັດແຍ່ງ;<br>• ຮັບຜິດຊອບຄ່າໃຊ້ຈ່າຍໃນການໄກ່ເກ່ຍ ຊຶ່ງຈ່າຍເຄິ່ງ ໜຶ່ງຂອງມູນຄ່າ;<br>• ເຄົາລົບ ແລະ ປະຕິບັດຕາມກົດລະບຽບການໄກ່ເກ່ຍ (ເຊັ່ນ: ຮັກສາຂໍ້ມູນທັງໝົດເປັນຄວາມລັບ);<br>• ປະຕິບັດຜົນໄດ້ຮັບຂອງການໄກ່ເກ່ຍ (ຖ້າຫາກທ່ານໄດ້ຍອມຮັບຜົນໄດ້ຮັບແລ້ວ);<br>• ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. |

ແຫຼ່ງຂໍ້ມູນ: ດຳລັດວ່າດ້ວຍການໄກ່ເກ່ຍຂັ້ນບ້ານ, ມາດຕາ 24

## ຜົນທີ່ທ່ານຈະໄດ້ຮັບ ມີຫຍັງໄດ້ແດ່?

ການໄກ່ເກ່ຍຂັ້ນບ້ານ - ຄືກັນກັບການໄກ່ເກ່ຍອື່ນໆ - ເຊິ່ງຈະບໍ່ສາມາດຮັບປະກັນໄດ້ວ່າ ບັນຫາຂໍ້ຂັດແຍ່ງຖືກແກ້ໄຂໄດ້ທັງໝົດ. ແຕ່ມັນກໍ່ເປັນຄວາມພະຍາຍາມ ເພື່ອອຳນວຍຄວາມສະດວກໃຫ້ຄູ່ກໍລະນີສາມາດຕົກລົງຮ່ວມກັນຢ່າງເປັນມິດ. ຖ້າຫາກບໍ່ສາມາດຕົກລົງກັນໄດ້ ກໍ່ຍັງມີຂະບວນການແກ້ໄຂທາງດ້ານກົດໝາຍຂັ້ນຕໍ່ໄປ. ນີ້ກໍ່ໝາຍຄວາມວ່າ ທ່ານຍັງມີທາງເລືອກອື່ນຕື່ມທີ່ຈະຍື່ນຄຳຮ້ອງທຸກ ຕໍ່ພະນັກງານຜູ້ຮັບຜິດຊອບທີ່ກ່ຽວຂ້ອງ (ເບິ່ງພາກທີ 3).

ການຕົກລົງຮ່ວມກັນ ຜ່ານການໄກ່ເກ່ຍ ບໍ່ຄວນໃຫ້ມັນຂັດກັບລະບຽບກົດໝາຍ.

## ທ່ານຈະມີຄວາມສ່ຽງບໍ ໃນການເຂົ້າໄປໄກ່ເກ່ຍຢູ່ຂັ້ນບ້ານ?

ການໄກ່ເກ່ຍຢູ່ຂັ້ນບ້ານບໍ່ມີຄວາມສ່ຽງ, ແຕ່ທ່ານຈຳເປັນຕ້ອງມີຄ່າໃຊ້ຈ່າຍ - ເຖິງແມ່ນວ່າທ່ານຈະບໍ່ສາມາດຕົກລົງຮ່ວມກັນໄດ້ (ເບິ່ງລາຍລະອຽດຂ້າງລຸ່ມນີ້). ເນື່ອງຈາກວ່າທ່ານເປັນຜູ້ເຈລະຈາດ້ວຍຕົນເອງ ແລະ ທ່ານສາມາດປະຕິເສດ ຜົນຂອງການແກ້ໄຂ ຖ້າທ່ານບໍ່ເຫັນດີ ແລະ ຈະບໍ່ມີຄວາມສ່ຽງທີ່ຈະເປັນອັນຕະລາຍຫຍັງຕໍ່ທ່ານ. ຍ້ອນວ່າຜູ້ເຂົ້າຮ່ວມທັງໝົດ ຈະຮັກສາຂໍ້ມູນໄວ້ເປັນຄວາມລັບ ໂດຍບໍ່ໃຫ້ຂໍ້ມູນທີ່ສົນທະນາກັນ ເປີດເຜີຍສູ່ສັງຄົມຂ້າງນອກ. ຄຳຄິດຄຳເຫັນຂອງທ່ານ ບໍ່ສາ ມາດກັບຄືນມາທຳລາຍ ຫຼື ສ້າງບັນຫາໃຫ້ທ່ານໃນອານາຄົດໄດ້.

## ການໄກເກ່ຍຢູ່ຂັ້ນບ້ານ ທ່ານຈະເສຍຄ່າໃຊ້ຈ່າຍເທົ່າໃດ?

ບໍ່ວ່າການໄກ່ເກ່ຍຂັ້ນບ້ານຈະຕົກລົງກັນໄດ້ ຫຼື ບໍ່ໄດ້ກໍ່ຕາມ ທ່ານຈະຕ້ອງໄດ້ມີຄ່າໃຊ້ຈ່າຍໃນການດຳເນີນການ ໂດຍທ່ານ ແລະ ຄູ່ກໍລະນີ ຮັບຜິດຊອບຄ່າໃຊ້ຈ່າຍ ເທົ່າທຽມກັນ. ດັ່ງນັ້ນ, ຖ້າຫາກທ່ານມີບໍລິສັດເປັນຝ່າຍກົງກັນຂ້າມ ທ່ານຈຳຕ້ອງໄດ້ຈ່າຍເຄິ່ງໜຶ່ງຂອງຄ່າໃຊ້ຈ່າຍ. ເນື່ອງຈາກຄ່າໃຊ້ຈ່າຍທັງໝົດບໍ່ຄວນເກີນ 200.000 ກີບ ນັ້ນກໍ່ໝາຍຄວາມວ່າທ່ານຈະໄດ້ເສຍຄ່າໃຊ້ຈ່າຍໃນກໍລະນີນີ້ແມ່ນ 100.000 ກີບ. ຖ້າທ່ານບໍ່ສາມາດເສຍຄ່າໃຊ້ຈ່າຍເອງໄດ້ ທ່ານຈະຖືກຍົກເວັ້ນຈາກການເກັບຄ່າບໍລິການດັ່ງກ່າວ ແຕ່ທ່ານຈຳເປັນຕ້ອງມີໃບຢັ້ງຢືນຈາກອຳນາດການປົກຄອງບ້ານ ເພື່ອຢັ້ງຢືນວ່າທ່ານບໍ່ສາມາດຈ່າຍຄ່າໃຊ້ຈ່າຍດັ່ງກ່າວໄດ້ດ້ວຍຕົນເອງ ຍ້ອນເຫດຜົນຂອງຄວາມທຸກຍາກ ຫຼື ຖານະດ້ານການເງິນບໍ່ພຽງພໍ ແລະ ອື່ນໆ.

## 5. ສະຫຼຸບ

ໃນກໍລະນີ ນັກລົງທຶນເຂົ້າມາບຸກລຸກ ເນື້ອທີ່ດິນຂອງທ່ານ ຫຼື ສ້າງມົນລະພິດຕໍ່ສິ່ງແວດລ້ອມຂອງທ່ານ ຫຼື ບໍ່ປະຕິບັດຕາມຂໍ້ຕົກລົງທີ່ພວກທ່ານໄດ້ຕົກລົງກັນໄວ້, ທ່ານມີ 3 ທາງເລືອກທີ່ແຕກຕ່າງກັນ ເພື່ອຍື່ນຄຳຮ້ອງທຸກ ແລະ ຮຽກຮ້ອງຂໍການແກ້ໄຂ ເພື່ອຢຸດຕິຄວາມເສຍຫາຍ. ທ່ານສາມາດຍື່ນຄຳຮ້ອງທຸກກັບບໍລິສັດໂດຍກົງໃນກໍລະນີ ບໍລິສັດມີກົນໄກການຮ້ອງທຸກຂອງບໍລິສັດ. ທ່ານສາມາດຍື່ນຄຳຮ້ອງທຸກກົນໄກການແກ້ໄຂຄຳຮ້ອງທຸກຂອງລັດຖະບານ ຫຼື ໃນກໍລະນີທີ່ມີບັນຫາເລັກນ້ອຍທ່ານສາມາດຍື່ນຄຳຮ້ອງ ຕໍ່ໜ່ວຍໄກ່ເກ່ຍຂອງບ້ານ. ທ່ານສາມາດເຂົ້າໄປສະເໜີຂໍການໄກ່ເກ່ຍຂໍ້ຂັດແຍ່ງ ຕໍ່ກົນໄກການຮ້ອງທຸກຂອງບໍລິສັດ ແລະ ການໄກ່ເກ່ຍຂັ້ນບ້ານ. ຖ້າຫາກ ຍື່ນຄຳຮ້ອງທຸກ ຜ່ານກົນໄກການແກ້ໄຂຄຳຮ້ອງທຸກຂອງລັດ ຖະບານ ທ່ານອາດຈະໄດ້ປະກອບສຳນວນຄຳຮ້ອງທຸກ ເຖິງອົງການປົກຄອງບ້ານ, ເມືອງ, ແຂວງ ຫຼື ອົງການປົກຄອງຂັ້ນສູນກາງ.

ທ່ານຄວນທຳຄວາມເຂົ້າໃຈກັບຂະບວນການໄກ່ເກ່ຍ ແລະ ກ່ອນຈະຍື່ນຄຳຮ້ອງທຸກໃດໜຶ່ງ ທ່ານຄວນຝຶກຊ້ອມ ການນຳສະເໜີ /ອະທິບາຍບັນຫາຂໍ້ຂັດແຍ່ງ, ຜົນປະໂຫຍດ, ຄວາມຕ້ອງການຂອງທ່ານໃຫ້ລະອຽດຈະແຈ້ງ ເພື່ອໃຫ້ຝ່າຍກົງ ກັນຂ້າມ ແລະ ຜູ້ ໄກ່ເກ່ຍສາມາດເຂົ້າໃຈຄວາມເສຍຫາຍທີ່ທ່ານກຳລັງປະເຊີນຢູ່ໄດ້ງ່າຍ ແລະ ທ່ານຄວນສະເໜີແນວຄວາມຄິດຕາມທັດສະນະຂອງທ່ານ ເປັນຕົ້ນແມ່ນ ຄວາມຈຳເປັນທີ່ຕ້ອງໄດ້ດຳເນີນການແກ້ໄຂ ເພື່ອຢຸດຕິບໍ່ໃຫ້ເກີດຄວາມເສຍຫາຍທີ່ຮຸນແຮງ ແລະ ແຜ່ ລາມອອກໄປໃນອານາຄົດ. ອົງການຈັດຕັ້ງທາງສັງຄົມ ທີ່ລະບຸໄວ້ຢູ່ໃນພາກທີ 3 ອາດຈະສາມາດໃຫ້ການຊ່ວຍເຫຼືອທ່ານໄດ້.

ການເລືອກວິທີທີ່ເໝາະສົມທີ່ສຸດ ສຳລັບການຮ້ອງທຸກອາດຈະຂຶ້ນຢູ່ກັບວ່າ ຂໍ້ມູນການຕິດຕໍ່ທີ່ມີຢູ່ແລ້ວ ຫຼື ສິ່ງທີ່ເປັນໄປໄດ້ກ່ຽວກັບ ຈຸດພິເສດຂອງບໍລິສັດ ແລະ ຄວາມສຳພັນ ທີ່ທ່ານມີກັບ ອົງການບໍລິຫານ ແລະ ອົງການປົກຄອງ ທີ່ກ່ຽວ ຂ້ອງ. ນອກຈາກນີ້ກໍ່ຍັງຂຶ້ນກັບລັກສະນະ ແລະ ມູນຄ່າຂອງຄວາມເສຍຫາຍທາງດ້ານການເງິນນຳອີກ. ເຖິງຈະຕົກຢູ່ໃນກໍລະນີໃດກໍ່ຕາມ, ທ່ານກໍ່ຄວນເລືອກຊ່ອງທາງທີ່ທ່ານຄິດວ່າຈະໄດ້ຮັບຄວາມເປັນທຳທີ່ສຸດ ແລະ ເລືອກບ່ອນທີ່ທ່ານຄິດວ່າການດຳ ເນີນ ງານຈະປະຕິບັດຕໍ່ທ່ານຢ່າງມີຄວາມເທົ່າທຽມກັນ. ທ່ານມີສິດໃນການເລືອກຊ່ອງທາງໃນການແກ້ໄຂຂໍ້ຂັດແຍ່ງຂອງທ່ານເອງໄດ້. ສິ່ງທີ່ຄວນຄຳນຶງ ແມ່ນທ່ານຈະບໍ່ສາມາດຍື່ນຄຳຮ້ອງທຸກ ຫາບໍລິສັດ ຫຼື ໜ່ວຍໄກ່ເກ່ຍຂັ້ນບ້ານໄດ້ ຖ້າຫາກທ່ານໄດ້ຮັບຄຳຕັດສິນຂອງສານປະຊາຊົນອອກມາແລ້ວ.

ສະນັ້ນ, ຈຶ່ງແນະນຳວ່າ ທ່ານຄວນຂໍຄຳແນະນຳຈາກພາກສ່ວນທີ່ກ່ຽວຂ້ອງ ທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ເຊັ່ນ: ສະພາ ທະນາຍຄວາມ ຫຼື ນັກກົດໝາຍຊຸມຊົນ ກ່ອນທີ່ຈະຕັດສິນໃຈເລືອກຊ່ອງທາງໃດໜຶ່ງ.

## 6. ເອກະສານອ້າງອີງ

Government of Laos (2022): Prime Minister Decree No. 389/GoL, Dated 20.10.2022 on Environmental Impact Assessment.

Government of Laos (2021): Decree on Village Mediation Unit.

Government of Laos (2021): Presidential Statute on Fees and Technical Services, No. 002, Dated 17/6/2021.

Government of Laos (2020): Decree of Public Private Partnership No. 624/GOV.

Government of Laos (2016): Revised Law on Conflict Resolutions and Grievance Redress Mechanisms.

NIRAS/IP Consult/GIZ (2022): Analysis of Conflict Resolution and Grievance Redress mechanisms for Local Communities in the Context of Agricultural land-based Investments in Lao PDR.

United Nations/United Nations Human Rights Office of the High Commissioner (2011): Guiding Principles on Business and Human Rights. New York/Geneva.




**ຈັດພິມໂດຍ:**
ກະຊວງ ແຜນການ ແລະ ການລົງທຶນ ແລະ ອົງການຮ່ວມມືສາກົນຂອງປະເທດເຢຍລະມັນ GIZ (Deutsche Gesellschaft für Internationale Zusammenarbeit GmbH)

**ສຳນັກງານຕັ້ງຢູ່:**
ບອນ ແລະ ເອຊ໌ບອຣນ, ປະເທດເຢຍລະມັນ (Bonn and Eschborn, Germany)
ກົມພັດທະນາຊົນນະບົດ ແລະ ກະສິກຳ
Friedrich Ebert Allee 36 + 40
53113 ບອນ, ປະເທດເຢຍລະມັນ
ໂທ: +49 228 44 60-0
ອີເມວ: GlobalvorhabenLand@giz.de
ເວັບໄຊທ໌: www.giz.de/responsiblelandpolicy

**ຜູ້ຮັບຜິດຊອບ:**
ປອ. Klaus Ackermann, klaus.ackermann@giz.de/Dr. Oliver Schoenweger, oliver.schoenweger@giz.de
Responsible RGIL Laos: Eva Prediger, eva.prediger@giz.de

**ທີ່ປຶກສາ:**
ປອ. Babette Wehrmann, ປອ. ວົງ ນັນທະວົງ (ທີ່ປຶກສາ NIRAS-IP), ສຸລິນດາ ມະນີໂຊດ ແລະ ທົງທອງ ສີຣິວັດ (ທີ່ປຶກສາ NIRAS-IP, ອົງການບ້ານຈຸດສຸມສາກົນ - VFI)

**ປະກອບສ່ວນທາງດ້ານເນື້ອໃນ:**
ວານິດາ ຄວາງວິຈິດ, Nora Teufel ແລະ ຂັນແກ້ວ ອຸປຣະວັນ ຈາກ GIZ ແລະ Lorenz Jenni ແລະ Jan Schulz (NIRAS-IP Consult)

**ແປ ແລະ ຮຽບຮຽງພາສາລາວ:**
ບໍລິສັດ Connected Consultancy Company Limited, ປອ. ວົງ ນັນທະວົງ, ຂັນແກ້ວ ອຸປຣະວັນ, ນິກອນ ອິ້ນແສງມະນີ

**ອອກແບບ ແລະ ພາບປະກອບໂດຍ:**
Milorad Vidovic ແລະ ນິວົງ ແສງສາກຸນ ທີ່ປຶກສາ NIRAS-IP ພາຍໃຕ້ໂຄງການ RGIL


**ລິ້ງເວບໄຊທ໌ (URL links):**
ເວັບໄຊທ໌ພາຍນອກ ທີ່ເຊື່ອມຕໍ່ ຫຼື ໄດ້ລະບຸຢູ່ໃນປື້ມຫົວນີ້ ດ້ານເນື້ອໃນແມ່ນເປັນຄວາມຮັບຜິດຊອບຂອງຜູ້ຈັດພິມຂອງເວັບໄຊທ໌ເຂົາເຈົ້າເອງ. GIZ ຈະບໍ່ມີສ່ວນຮັບຜິດຊອບຕໍ່ເນື້ອຫາໃດໆ ໃນເວັບໄຊທ໌ພາຍນອກດັ່ງກ່າວ.
ການປະຕິເສດຄວາມຮັບຜິດຊອບ:
ປື້ມຫົວນີ້ຖືກຂຽນຂຶ້ນ ເຊິ່ງເປັນສ່ວນໜຶ່ງຂອງ ໂຄງການສົ່ງເສີມການຄຸ້ມຄອງການລົງທຶນໃນຂົງເຂດທີ່ດິນ ຢ່າງມີຄວາມຮັບຜິດຊອບ (RGIL), ໂດຍໄດ້ຮັບທຶນສະໜັບສະໜູນຈາກ ສະຫະພາບເອີຣົບ ແລະ ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ຂອງລັດຖະບານເຢຍລະມັນ. ເນື້ອໃນຫຼັກແມ່ນເປັນຄວາມຮັບຜິດຊອບຂອງ GIZ ແຕ່ພຽງຜູ້ດຽວ ແລະ ຈະບໍ່ແມ່ນຄວາມຮັບຜິດຊອບຂອງ ສະຫະພາບເອີຣົບ ຫຼື ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ.


ໂຄງການ RGIL ຈັດຕັ້ງປະຕິບັດຢູ່ພາຍໃຕ້ກອບລວມຂອງໂຄງການຢູ່ ສາມ ປະເທດຄື: ໂຄງການ S2RAI ຢູ່ປະເທດ ອີທິໂອເປຍ, ໂຄງການ ELTeS ຢູ່ ສປປ ລາວ, ໂຄງການ RELAPU ຢູ່ ປະເທດ ອູການດາ. ໂຄງການເຫຼົ່ານີ້ແມ່ນໄດ້ຖືກຈັດຕັ້ງປະຕິບັດ ພາຍໃຕ້ ໂຄງການລະດັບໂລກ ກ່ຽວກັບ ນະໂຍບາຍດ້ານທີ່ດິນ ເຊິ່ງເປັນສ່ວນໜຶ່ງໃນການລິເລີ່ມໂຄງການສະເພາະຂອງເຢຍລະມັນ "ການປັບປຸງລະບົບກະສິກຳ ແລະ ສະບຽງອາຫານ" ຂອງ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ຂອງລັດຖະບານເຢຍລະມັນ (BMZ). ໂຄງການ RGIL ແມ່ນໄດ້ຮັບທຶນຮ່ວມສະໜັບສະໜູນ ຈາກສະຫະພາບເອີຣົບ ແລະ BMZ.
ເປົ້າໝາຍຂອງໂຄງການແມ່ນ ເພື່ອຮັບປະກັນໃຫ້ ການລົງທຶນໃຂຂົງເຂດທີ່ດິນມີປະສິດທິຜົນ, ປະກອບສ່ວນຕໍ່ການຄຸ້ມຄອງທີ່ດິນທີ່ຍືນຍົງ ແລະ ເຄົາລົບສິດ ແລະ ຄວາມຕ້ອງການຂອງ ຊຸມຊົນທ້ອງຖິ່ນ ໂດຍສະເພາະແມ່ນກຸ່ມທີ່ມີຄວາມສ່ຽງ ແລະ ແມ່ຍິງ.
GIZ ແມ່ນພາກສ່ວນທີ່ຮັບຜິດຊອບ ດ້ານເນື້ອໃນຂອງປຶ້ມຄູ່ມືນີ້.

**ທີ່ ເມືອງບອນ, ປະເທດເຢຍລະມັນ, ມິຖຸນາ 2023**

ກົມສົ່ງເສີມການລົງທຶນ
INVESTMENT PROMOTION DEPARTMENT

Co-funded by the European Union

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH